ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະນາຖາວອນ
****

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ
ກົມພັດທະນາການທ່ອງທ່ຽວ ແຂວງສະຫວັນນະເຂດ, 16/02/2013

ບົດລາຍງານ
ການສຳຫລວດກຳນົດເຂດພັດທະນາແຫຼ່ງທ່ອງທ່ຽວຜາສາດເຮືອນຫີນ, ເມືອງໄຊພູທອງ, ແຂວງສະຫວັນນະເຂດ ລະຫວ່າງ ວັນທີ 14-17/02/2013

I. ພາກສະເໜີ

ອີງຕາມແຜນຍຸດທະສາດພັດທະນາ ແລະ ສົ່ງເສີມການທ່ອງທ່ຽວຂອງ ສ ປ ປ ລາວ 2006–2020 ອີງຕາມສະພາບຄວາມຕ້ອງການຂອງວຽກງານການພັດທະນາແຫຼ່ງທ່ອງທ່ຽວ, ການຈັດສັນແຫຼ່ງທ່ອງທ່ຽວ ເປັນວຽກງານບູລິມາສິດຂອງຂະແໜງການທ່ອງທ່ຽວ, ເພື່ອການກຳນົດເຂດແຫຼ່ງທ່ອງທ່ຽວໃນແຕ່ລະແຫ່ງ ໃນທົ່ວປະເທດໃຫ້ເປັນລະບົບ, ເປັນພື້ນຖານໃຫ້ແກ່ການລົງທຶນພັດທະນາ, ຊ່ວຍການອະນຸລັກຮັກສາຊັບພະຍາກອນການທ່ອງທ່ຽວໃຫ້ມີຄວາມຍືນຍົງ.

ໂຄງການຈັດສັນແຫຼ່ງທ່ອງທ່ຽວໄດ້ເລີ້ມຈັດຕັ້ງປະຕິບັດ ໃນສົກປີ 2009-2010 ໂດຍແມ່ນອົງການທ່ອງທ່ຽວແຫ່ງຊາດ(ເກົ່າ), ຊຶ່ງມີກົມພັດທະນາການທ່ອງທ່ຽວ ເປັນຜູ້ຮັບຜິດຊອບໂດຍກົງໄດ້ລົງປະສານງານກັບບັນດາແຂວງໃນທົ່ວປະເທດເພື່ອຈັດສັນແຫຼ່ງທ່ອງທ່ຽວ, ໃນເບື້ອງຕົ້ນທີມງານຂັ້ນສູນກາງໄດ້ນຳພາບັນດາແຂວງຈັດຕັ້ງປະຕິບັດໂຄງການຈັດສັນແຫຼ່ງທ່ອງທ່ຽວແຂວງລະ 1 ແຫ່ງ, ຫຼັງຈາກນັ້ນແມ່ນໃຫ້ແຕ່ລະແຂວງສືບຕໍ່ຈັດຕັ້ງປະຕິບັດ, ທີມງານຂັ້ນສູນກາງຈະລົງມາຊ່ວຍທາງດ້ານວິຊາການຈົນກ່ວາຈະສຳເລັດ.

ໃນການຈັດສັນແຫຼ່ງທ່ອງທ່ຽວຂອງແຂວງສະຫວັນນະເຂດ, ພະແນກຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອ ງທ່ຽວແຂວງສະຫວັນນະເຂດ ໄດ້ນຳສະເໜີໃຫ້ກົມພັດທະນາການທ່ອງທ່ຽວລົງສຳຫຼວດຈັດສັນເຂດແຫຼ່ງທ່ອງທ່ຽວຜາສາດເຮືອນຫີນເປັນແຫລ່ງທ່ອງທ່ຽວທາງປະຫວັດສາດວັດທະນະທຳທີ່ເກົ່າແກ່ຂອງແຂວງ.

ກ່ອນຈະລົງຈັດຕັ້ງປະຕິບັດກິດຈະກຳໄດ້ມີການຈັດກອງປະຊຸມ ເພື່ອເຜີຍແຜ່ເອກະສານການຈັດສັນແຫຼ່ງທ່ອງທ່ຽວໃຫ້ພາກສ່ວນຕ່າງໆໄດ້ຮັບຮູ້ ແລະ ເຂົ້າໃຈ, ໂດຍແມ່ນ ທ່ານ ນາງ ແພງຈັນ ແພງເມືອງ ຮອງຫົວໜ້າກົມພັດທະນາການທ່ອງທ່ຽວ, ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໄດ້ນຳສະເໜີເອກະສານການກຳຮູບແບບ ແລະ ວິທີການຈັດສັນແຫຼ່ງທ່ອງທ່ຽວໃຫ້ກອງປະຊຸມໄດ້ຮັບຊາບ, ຊຶ່ງຜູ້ເຂົ້າຮ່ວມແມ່ນມາຈາກພາກສ່ວນກ່ຽວຂ້ອງຂອງແຂວງສະຫວັນນະເຂດ ແລະ ເມືອງ ໄຊພູທອງ ເຊັ່ນ: ຫ້ອງວ່າການແຂວງ, ຂະແໜງກະສິກຳ ແລະ ປ່າໄມ້ , ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ

ທ່ອງທ່ຽວເມືອງໄຊພູທອງ, ກອງປ່າສະຫງວນ, ຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ນາຍບ້ານບ້ານເຮືອນຫີນ.

ພາຍຫລັງກອງປະຊຸມຄະນະຮັບຜິດຊອບໄດ້ມີການແບ່ງປັນໜ້າທີ່ຄວາມຮັບຜິດຊອບໃຫ້ທີມງານຂອງສູນກາງ ແລະ ທີມງານຂອງແຂວງໃນການລົງສຳຫຼວດ ແລະ ຈັດສັນແຫຼ່ງທ່ອງທ່ຽວຊຸນກອງແລງ ໂດຍມີ 2 ທີມງານຄື: ທີມງານສຳຫຼວດເນື້ອທີ່ແຫຼ່ງທ່ອງທ່ຽວ ແລະ ທີມງານສຳຫຼວດສະພາບເສດຖະກິດ - ສັງຄົມ.

ພາຍຫຼັງການສຳຫຼວດທີມງານສູນກາງ ຈະໄດ້ຮ່າງເອກະສານບົດລາຍງານການຈັດສັນແຫຼ່ງທ່ອງທ່ຽວດັ່ງກ່າວ, ເພື່ອນຳເອົາແນວຄວາມຄິດການພັດທະນາແຫຼ່ງທ່ອງທ່ຽວ ແລະ ການກຳນົດຂອບເຂດແຫຼ່ງທ່ອງທ່ຽວດັ່ງກ່າວ ສະເໜີຕໍ່ການນຳແຂວງຂໍທິດຊີ້ນຳ ແລະ ການຮັບຮອງເອົາ.

ກອງປະຊຸມແຈ້ງຈຸດປະສົງຂອງທີມງານ ແລະ ຮັບຟັງຂໍ້ມູນຈາກຮອງເຈົ້າເມືອງຫ້ໄຊພູທອງ

ທີມງານທີ່ລົງສຳຫລວດແຫລ່ງທ່ອງທ່ຽວພາສາດເຮືອນຫີນ

ລົງສຳພາດອຳນາດການປົກຄອງບ້ານ ແລະ ສຳຫລວດພື້ນທີ່ຕົວຈິງ

ຈຸດປະສົງຕົ້ນຕໍຂອງການລົງສຳຫຼວດ, ເກັບກຳຂໍ້ມູນ ແລະ ກຳນົດເຂດແຫຼ່ງທ່ອງທ່ຽວຜາສາດເຮືອນຫີນ ແມ່ນເພື່ອ:

- ກຳນົດເຂດໃນບໍລິເວນແຫຼ່ງທ່ອງທ່ຽວປະຫັວດສາດ, ວັດທະນະທຳຜາສາດເຮືອນຫີນ, ຈັດສັນໃຫ້ເປັນລະບົບ ເຊັ່ນ: ເຂດກັນຊົນ, ເຂດອະນຸລັກ, ເຂດສະຫງວນ ແລະ ເຂດບໍລິການ.
- ກຳນົດກິດຈະກຳການບູລະນະ ແລະ ປະຕິສັງຂອນແຫຼ່ງທ່ອງທ່ຽວ.
- ແນະນຳແນວຄວາມຄິດໃນການພັດທະນາບໍລິເວນແຫຼ່ງປະຫັວດສາດ, ວັດທະນະທຳຜາສາດເຮືອນຫີນ ແນໃສ່ປັບປຸງ ແລະ ພັດທະນາສິ່ງອຳນວຍຄວາມສະດວກໃນແຫຼ່ງທ່ອງທ່ຽວ, ເຮັດໃຫ້ປະຊາຊົນທ້ອງຖິ່ນມີສ່ວນຮ່ວມ ໃນກິດຈະກຳການທ່ອງທ່ຽວ, ເພື່ອອະນຸລັກ ແລະ ຂົນຂວາຍການລົງທຶນ ກໍ່ສ້າງໂຄງລ່າງພື້ນຖານທີ່ຈຳເປັນ ຮັບໃຊ້ການບໍລິການນັກທ່ອງທ່ຽວພາຍໃນ ແລະ ດຶງດູດນັກທ່ອງທ່ຽວຕ່າງປະເທດມາທ່ອງທ່ຽວ ບົດລາຍງານສະບັບນີ້ຈຳນວນຫນຶ່ງ ແມ່ນໄດ້ມາຈາກການສຳຫຼວດ, ການເກັບກຳຂໍ້ມູນ, ການວັດແທກເນື້ອທີ່ຕົວຈິງ, ການພົບປະສຳພາດກັບອຳນາດການປົກຄອງທີ່ກ່ຽວຂ້ອງຈາກແຂວງສະຫວັນນະເຂດ, ເມືອງໄຊພູທອງ ແລະ ການພົບປະແລກປ່ຽນຄວາມຄິດເຫັນກັບນາຍບ້ານບ້ານເຮືອນຫີນ. ນອກຈາກນີ້, ຂໍ້ມູນສ່ວນຫນຶ່ງກໍໄດ້ມາຈາກບົດສະຫລຸບຂອງພະແນກການທີ່ກ່ຽວຂ້ອງຂອງແຂວງ, ຂອງເມືອງ ແລະ ຂອງບ້ານ ເຊັ່ນ: ເອກະສານຄົ້ນຄວ້າທາງປະຫວັດສາດຂອງແຂວງສະຫວັນນະເຂດ ເຫລັ້ມທີ່ 11, ບົດສະຫລຸບຕີລາຄາສະພາບຮອບດ້ານ ສົກປີ 2011-2012 ແລະ ທິດທາງແຜນການ ສົກປີ 2012-2013 ຂອງເມືອງໄຊພູທອງ, ຫ້ອງການ ຖວທ ເມືອງ, ປຶ້ມສະຖິຕິການທ່ອງທ່ຽວຂອງກົມພັດທະນາການທ່ອງທ່ຽວ ແລະ ຂອງພະແນກ ຖວທ ແຂວງສະຫວັນນະເຂດ.

ບົດລາຍງານສະບັບນີ້ປະກອບມີ 4 ພາກໃຫຍ່ຄື:

- ພາກທີ I: ພາກສະເຫນີ
- ພາກທີ II: ສະພາບທີ່ຕັ້ງ ແລະ ຈຸດພິເສດ
- ພາກທີ III: ການວິເຄາະຈຸດດີ, ຈຸດອ່ອນ, ໂອກາດ ແລະ ສິ່ງທ້າທາຍ SWOT
- ພາກທີ IV: ແນວຄວາມຄິດໃນການພັດທະນາແຫຼ່ງທ່ອງທ່ຽວຜາສາດເຮືອນຫີນ

II. ສະພາບທີ່ຕັ້ງ ແລະ ຈຸດພິເສດ

ແຫຼ່ງທ່ອງທ່ຽວຜາສາດເຮືອນຫີນມີປະຫັວດຄວາມເປັນມາທີ່ໜ້າສົນໃຈ, ກ່ອນທີ່ສະເໜີໃຫ້ເຫັນສະພາບທີ່ຕັ້ງ ແລະ ຈຸພິເສດໃນພາກນີ້ທີມງານຈະໄດ້ນຳສະເໜີປະຫັວດຄວາມເປັນມາຂອງແຫຼ່ງທ່ອງທ່ຽວດັ່ງນີ້:

ເຮືອນຫີນຜ່ານກາຍມາ ການບູລະນະ ແລະ ປະຕິສັງຂອນເຖິງ 3 ສະໄໝ

1. ໄລຍະທຳອິດ ສະໄໝຂອມເຮືອງອຳນາດ ສ້າງສຳເລັດເປັນຫໍບູຊາບວງສວງ ບັນພະບູລຸດມາແລ້ວ ສະໄໝສາດສະໜາພາມ ອິນດູ ສັດຕະວັດທີ VI – VII.
2. ໄລຍະສາສະໜາພຸດເຮືອງອຳນາດ ໃນລາສະການ ພະເຈົ້າໄຊເສດຖາທິລາດທີ 1 ສັດຕະວັດ 15 ສະແດງອອກຮ່ອງຮອຍດັດແປງແອບແຝງໃສ່ພຸດທະສະຖານ, ສາສະໜາມີພຸດທະຮູບ ແລະ ທາດດູກອື່ນໆ ແປະໃສ່ທີ່ເປັນເອກະລັກຂອງຄົນເຮົາ ເປັນເຈົ້າປົກປັກຮັກສາເຮືອນຫີນ ສືບສານກັນມາເທົ່າທຸກວັນນີ້. ຄິດໄລ່ລັກສະນະຂອງສາກແລ້ວເປັນເລື່ອງສ້າງຂຶ້ນຂອງຄົນລະຍຸກ.
3. ໄລຍະການກວດຕ້ອນຂອງອຳນາດອານາຈັກຊຸ່ມ (SIAM) ຍຶດຄອງເຜົ່າຜູ້ໄທໄປສະຫຍາມ (ເຜົ່າຜູ້ໄທ, ວັ້ງ, ເຊໂປນ) ຈາກເມືອງຊານຸມານ, ຍະໂສ, ອຸບົນ ແລະ ສາຍບໍ່ແກ່ (ເລນູ) ກັບມາບໍ່ເຖິງຖິ່ນຕົກຄ້າງຢູ່ເຂດເຮືອນຫີນ, ເຜົ່າເຫຼົ່ານີ້ ຈຶ່ງການມາເປັນເຊື່ອສາຍປົກປັກຮັກສາເຮືອນຫີນ ເປັນລາມມະເຫສັກສິ່ງສະຖິດເຂົ້າໜ້ຫງມບ່ອກປາກອອກວ່າ: (ຖ້າຜູ້ໃດເປັນໄພ້,ເຂີຍ ຖືກຂຶ້ນເຮືອນຫີນ, ກໍ່ເກີດເປັນອາພາດ) ເຈັບໄຂ້ໄດ້ປ່ວຍບໍ່ຢູ່ດີມີແຮງ ແລະ (ເກືອດຫ້າມ) ຕາມຮີດ (ກົດຮີດນີ້ເປັນຂໍ້ບັງຄັບຂອງເຜົ່າຜູ້ໄທວັ້ງ ປະມານ 200 ກວ່າປີຜ່ານມາ).

1. ທີ່ຕັ້ງ ແລະ ຂອບເຂດເນື້ອທີ່ແຫລ່ງທ່ອງທ່ຽວ

ແຫລ່ງທ່ອງທ່ຽວທາງດ້ານປະຫວັດສາດ-ວັດທະນະທຳຜາສາດເຮືອນຫີນ ຕັ້ງຢູ່ເຂດເມືອງໄຊພູທອງແຂວງສະຫວັນນະເຂດ, ຫ່າງຈາກເທດສະບານເມືອງໄຊພູທອງ 16 ກິໂລແມັດ ແລະ ຫ່າງຈາກເທດສະບານແຂວງສະຫວັນນະເຂດໄປທາງທິດຕາເວັນອອກສ່ຽງໃຕ້ ປະມານ 60 ກິໂລແມັດ. ທີ່ຕັ້ງເຂດເຮືອນຫີນລວມມີ 15 ບ້ານ ກວມເອົາ 740 ກວ່າຫລັງຄາເຮືອນ, ບ້ານທີ່ຕັ້ງຢູ່ອ້ອມຂ້າງມີ 4 ບ້ານຄື: ບ້ານດົງດອກໄມ້, ບ້ານເຮືອນຫີນ(ກ່ອນນັ້ນເອີ້ນວ່າບ້ານດົງໝາກໝີ), ບ້ານເຫຼົ່າໝາກຫູດ ແລະ ບ້ານດອນສະໂນດ(ຢູ່ກາງນ້ຳຂອງ). ທີ່ຕັ້ງຂອງແຫລ່ງທ່ອງທ່ຽວເຮືອນຫີນຫັນໜ້າໃສ່ແມ່ນ້ຳຂອງ, ຊຶ່ງທິດເໜືອຂອງແຫລ່ງທ່ອງທ່ຽວຕິດກັບບ້ານເຫລົ່າໝາກຫູດ, ຕິດໃຕ້ຕິດກັບເຂດນາຟອງທ່າ, ເມືອງສອງຄອນ, ທິດຕາເວັນອອກຕິດກັບບ້ານດົງດອກໄມ້ ແລະ ທິດຕາເວັນຕົກຕິດກັບ ແມ່ນ້ຳຂອງ ກວມເອົາເນື້ອທັງໝົດມີ ..... ກິໂລຕາແມັດ.

ຮູບແຜນທີ່ທີ 1:

ຮູບແຜນທີ່ທີ 2:

1. ສະພາບເສດຖະກິດ ແລະ ວັດທະນະທຳ-ສັງຄົມຂອງກຸ່ມບ້ານທີ່ນອນຢູ່ໃນເຂດຜາສາດເຮືອນຫີນ

ທີມງານໄດ້ລົງສຳພາດ ແລະ ເກັບກຳຂໍ້ມູນຕົວຈິງທີ່ບ້ານເຮືອນຫີນ ເປັນບ້ານທີ່ຢູ່ຕິດກັບແຫລ່ງທ່ອງທ່ຽວຜາສາດເຮືອນຫີນ, ບ້ານເຮືອນຫີນລວມມີ 130 ຄອບຄົວ, 121 ຫລັງຄາເຮືອນ, ຈຳນວນພົນລະເມືອງທັງໝົດ 630 ຄົນ, ຍິງ 310 ຄົນ, ປະຊາຊົນສ່ວນໃຫຍ່ພາຍໃນບ້ານມີອາຊີບເປັນຊາວນາ, ນອກນີ້ ຍັງໄດ້ປູກຝັງ , ລ້ຽງສັດ ແລະ ຫາປາ ຫລັງຈາກນັ້ນຊາວບ້ານໄດ້ນຳເອົາຜົນຜະລິດຂອງຕົນໄປຂາຍຢູ່ຕະຫລາດນັດຂອງຊາວບ້ານ ໃນທຸກໆວັນອັງຄານ. ປະຊາຊົນພາຍໃນບ້ານແມ່ນຊົນເຜົ່າລາວລຸ່ມ ແລະ ສ່ວນໃຫຍ່ມີພື້ນຖານທາງດ້ານການຜະລິດເຄື່ອງຫັດຖະກຳ ເຊັ່ນ : ຕຸ້ມ, ລານ, ແຮ, ມອງ, ຂອງ, ຕີບເຂົ້າ ... ແຕ່ສ່ວນຫລາຍແມ່ນຜະລິດເພື່ອຮັບໃຊ້ພາຍໃນຄອບຄົວ ຍັງບໍ່ທັນຜະລິດເພື່ອຂາຍເປັນສິນຄ້າ. ສະເລ່ຍລາຍຮັບຂອງປະຊາຊົນພາຍໃນບ້ານ 2,000,000 ກີບ/ຄົນ/ປີ. ນອກຈາກນີ້, ຊາວບ້ານຍັງມີລາຍໄດ້ຈາກການຈັດບຸນປະເພນີ ນະມັດສະການຜາສາດເຮືອນຫີນ ຊຶ່ງໄດ້ຈັດຂຶ້ນທຸກໆປີຂອງ ເດືອນ 4 ເພັ້ງ (ຕາມປະຕິທິນຂອງລາວ) ຊາວບ້ານສາມາດສ້າງລາຍໄດ້ຈາກການຂາຍເຄື່ອງດື່ມ, ອາຫານ, ທີ່ພັກ ແລະ ບໍລິການດອກໄມ້ທູດທຸງນຕ່າງໆ. ນອກຈາກນີ້, ຊາວບ້ານຍັງມີເງິນກອງທຶນໝູ່ບ້ານຈຳນວນໜຶ່ງ ຊຶ່ງໄດ້ຈາກທຶນບໍລິຈາກ ຈາກນັກທ່ອງທ່ຽວທີ່ມາທ່ຽວຊົມ ແລະ ສັກກະລະບູຊາຜາສາດເຮືອນຫີນ ເດືອນໜຶ່ງ ປະມານ 500,000 ຫາ 1,000,000 ກີບ. ສິ່ງອຳນວຍຄວາມສະດວກພາຍໃນບ້ານ ບ້ານມີໄຟຟ້າເຂົ້າເຖິງ, ສັນຍານໂທລະສັບ, ໃຊ້ລະບົບນ້ຳບາດານ, ມີໂຮງຮຽນມູນລະປະຖົມ ສ່ວນມັດທະຍົມແມ່ນໄປເຂົ້າຢູ່ບ້ານດົງດອກໄມ້, ສຸກສາລາແມ່ນໄປໃຊ້ຢູ່ບ້ານດົງດອກໄມ້ເຊັ່ນກັນ, ເສັ້ນທາງເຂົ້າເຖິງສະດວກດີ. ມີຮ້ານອາຫານແບບທຸລະກິດຄອບຄົວໜຶ່ງແຫ່ງ. ບ້ານເຮືອນຫີນຖືວ່າເປັນບ້ານທີ່ຫລຸດພົ້ນອອກຈາກຄວາມທຸກຍາກ.

ໝູ່ບ້ານເຮືອນຫີນ ແລະ ຮ້ານຂາຍເຄື່ອງຍ່ອຍ

3. ສະພາບດ້ານການທ່ອງທ່ຽວ

3.1 ສະພາບພາຍໃນແຫລ່ງທ່ອງທ່ຽວ

ເຖິງແມ່ນວ່າແຫລ່ງທ່ອງທ່ຽວຜາສາດເຮືອນຫີນ ຈະເປັນໜຶ່ງໃນແຫລ່ງທ່ອງທ່ຽວທີ່ໜ້າສົນໃຈ ແລະ ມີຄວາມສຳຄັນທາງດ້ານປະຫວັດສາດ- ວັດທະນະທຳຂອງລາວເຮົາ ແຕ່ ສະພາບດ້ານການທ່ອງທ່ຽວ ໃນປັດຈຸບັນຍັງບໍ່ທັນຄືກຄື້ນ ເນື່ອ ງຈາກວ່າແຫລ່ງທ່ອງທ່ຽວດັ່ງກ່າວ ເປັນແຫລ່ງທ່ອງທ່ຽວໃໝ່ທີ່ນັກທ່ອງ ທ່ຽວຍັງບໍ່ທັນຮັບຮູ້ຫລາຍ ແລະ ທາງດ້ານການໂຄສະນາ ກໍ່ຍັງບໍ່ທັນທົ່ວເຖິງ . ຊາວບ້ານທີ່ຢູ່ເຂດໃກ້ຄຽງ ກັບແຫ່ລງທ່ອງທ່ຽວ ຍັງບໍ່ທັນມີຄວາມຮັບຮູ້ເຂົ້າໃຈເລິກເຊິ່ງກ່ຽວກັບການທ່ອງທ່ຽວ ກໍຄືການບໍລິການ ແລະ ຄຸ້ມຄອງຕ່າງໆ. ສະນັ້ນ, ທາງທີມງານຈະໄດ້ເວົ້າລະອຽດກ່ຽວກັບການຄຸ້ມຄອງ, ປັບປຸງ ແລະ ພັດທະນາ ຕ່າງໆຢູ່ໃນຂໍ້ທີ IV ຂອງບົດລາຍງານສະບັບນີ້.

3.1.1 ສະພາບແວດລ້ອມ ແລະ ການຄຸ້ມຄອງການນຳໃຊ້ແຫລ່ງທ່ອງທ່ຽວ

ສະພາບແວດລ້ອມທາງທຳມະຊາດໃນບໍລິເວນຜາສາດຫີນ ແມ່ນມີຄວາມອຸດົມສົມບູນໄປດ້ວຍຕົ້ ນ ໄມ້ໃຫຍ່ເປັນຮົ່ມເຢັນ ອ້ອມຮອບຜາສາດເຮືອນຫີນ ສ່ວນທາງດ້ານໜ້າຂອງເຮືອນຫີນແມ່ນຕິດກັບແມ່ນ້ຳ

ຂອງ ຊຶ່ງມີວິວທິວທັດທີ່ສວຍງາມ ແລະ ເຢັນສະບາຍ . ທາງຫ້ອງການຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງໄຊພູທອງ ໄດ້ລົງ ສຳຫວດ ແລະ ຈັດສັນ້ຮ້ອລ້ອມເຂດສະຫງວນຜາສາດເຮືອນຫີນ ເພື່ອກຳນົດເຂດແຫລງທ່ອງທ່ຽວ ແລະ ຮັກສາສະພາບເດີມ ໂດຍມອບໃຫ້ບ້ານ ເຮືອນຫີນທີ່ຢູ່ຕິດກັບແຫລ່ງ ທ່ອງທ່ຽວເປັນຜູ້ຄຸ້ມຄອງຮັກສາ. ແຕ່ການຄຸ້ມຄອງຍັງບໍ່ທັນເປັນລະບົບລະບຽບ ໂດຍສະເພາະແມ່ນເລື່ອງ ຄວາມສະ ອາດ ເຊັ່ນ: ການຖິ້ມຂີ້ເຫຍື້ອຊະຊາຍພາຍໃນແຫລ່ງທ່ອງທ່ຽວ ແລະ ການອານາໄມ, ຫ້ອງນ້ຳ ສາທາລະ ນະ, ທີ່ພັກ ແລະ ຮ້ານອາຫານ. ສະນັ້ນ, ທີມງານວິຊາການຈະໄດ້ລະບຸລະອຽດກ່ຽວກັບການ ແບ່ງກຸ່ມ ເພື່ອຄຸ້ມຄອງຢ່າງເປັນລະບົບໃນຂໍ້ທີ 4.2.

3.1.2 ສະພາບໂຄງສ້າງການບໍລິການພາຍໃນແຫລ່ງທ່ອງທ່ຽວ

ໃນປັດຈຸບັນນີ້ ປະຊາຊົນໃນກຸ່ມບ້ານຍັງບໍ່ທັນໃຫ້ການບໍລິການຫລາກຫລາຍການທ່ອງທ່ຽວຮູບ ແບບ. ຄວາມຮັບຮູ້ ແລະ ເຂົ້າໃຈຂອງປະຊາຊົນຍັງບໍ່ທັນເລິກເຊິ່ງ . ສະພາບການບໍລິການໃນປັດຈຸບັນ ແມ່ນມີຜູ້ເຖົ້າຜູ້ແກ່ຂອງໝູ່ບ້ານພັດປ່ຽນກັນໄປເຝົ້າ ເພື່ອໃຫ້ບໍລິການດອກໄມ້ທູບທຽນ ແລະ ເຮັດພິທີບະ ຫລື ແກ້ບະຕ່າງໆ ສ່ວນການບໍລິການອື່ນໆຍັງບໍ່ມີ. ໃນປີໜຶ່ງຈະມີພຽງຄັ້ງດຽວໃນເດືອນ 4 ເພັງຂອງທຸກໆ ປີ ທີ່ບ້ານສາມາດສ້າງລາຍຮັບໄດ້ຈຳນວນໜຶ່ງ ໂດຍການບລິການອາຫານ , ເຄື່ອງດື່ມ ແລະ ທີ່ພັກ . ຊາວບ້ານຍັງມີຄວາມຕ້ອງການການຝຶກອົບຮົມໃນດ້ານຕ່າງໆໃນການບໍລິການການທ່ອງທ່ຽວ.

3.1.3 ສະພາບການຄົມມະນາຄົມ-ຂົນສົ່ງພາຍໃນແຫລ່ງທ່ອງທ່ຽວ

ເສັ້ນທາງຄົມມະນາຄົມຂົນສົ່ງຈາກເທດສະບານແຂວງສະຫວັນນະເຂດ ໄປຫາເທດສະບານເມືອງໄຊ ພູທອງແມ່ນຄວາມສະດວກສະບາຍໃນການເຂົ້າເຖິງ ແລະ ຈາກເທດສະບານເມືອງຫາແຫລ່ງທ່ອງທ່ຽວກໍມີ ຄວາມສະດວກດີ ເສັ້ນທາງເປັນເສັ້ນທາງດິນແດງ ແລະ ກຳລັງໄດ້ຮັບການປັບປຸງ ເປັນເສັ້ນທາງ 2 ເລນ ຄາດວ່າຈະສຳເລັດໃນປີ 2015 ນີ້.

ເສັ້ນທາງເຂົ້າເຖິງເມືອງ ແລະ ແຫລ່ງທ່ອງທ່ຽວຜາສາດຫີນ

3.1.4 ກິດຈະກຳການທ່ອງທ່ຽວທີ່ມີພາຍໃນແຫ່ງທ່ອງທ່ຽວ

ໃນປັດຈຸບັນບໍລິເວນແຫຼ່ງທ່ອງທ່ຽວຍັງບໍ່ທັນມີກິດຈະກຳການທ່ອງທ່ຽວໃດໆ ທີ່ເປັນໜ້າປະທັບໃຈ ເນື່ອງຈາກວ່າ ຈຳນວນນັກທ່ອງທ່ຽວທີ່ເຂົ້າມາທ່ຽວຊົມແຫຼ່ງທ່ອງທ່ຽວນີ້ ສ່ວນໃຫ່ຍແມ່ນມາທ່ຽວເອງ, ບາງ ຄະນະກໍມີພະນັກງານນຳທ່ຽວພາມາ, ແຕ່ການອະທິບາຍປະຫວັດຂອງແຫລ່ງທ່ອງທ່ຽວກໍ່ຍັງບໍ່ທັນເປັນ ເອກະພາບທາງດ້ານເນື້ອໃນ, ພາຍໃນແຫຼ່ງທ່ອງທ່ຽວບໍ່ມີກິດຈະກຳການບໍລິການເພື່ອດຶງດູດນັກທ່ອງທ່ຽວ ເນື່ອງຈາກແຫຼ່ງທ່ອງທ່ຽວແຫ່ງນີ້ ບໍ່ທັນໄດ້ຮັບການພັດທະນາ, ປະຊາຊົນທ້ອງຖິ່ນກໍ່ຍັງບໍ່ທັນເຂົ້າໃຈກ່ຽວ ກັບວຽກງານການທ່ອງທ່ຽວ, ບໍ່ທັນມີແນວຄວາມຄິດໃນການສ້າງກິດຈະກຳທີ່ເໝາະສົມເພື່ອບໍລິການນັກ ທ່ອງທ່ຽວໃນຕໍ່ໜ້າຄວນມີການພັດທະນາກິດຈະກຳຕ່າງໆຂຶ້ນ ເພື່ອບໍລິການນັກທ່ອງທ່ຽວເຊັ່ນ: ກິດຈະກຳຂີ່ ລົດ ຖີບທ່ຽວຊົມໃນແຕ່ລະຈຸດ, ກິດຈະກຳລອງເຮືອ, ກິດຈະກຳ Homestay, ການໂຂ່ປ່າ, ຕ້ຽງແຄມ, ຈັດ ງານເທດສະການບຸນປະເພນີຕ່າງໆ.

3.1.5 ຕະຫຼາດການທ່ອງທ່ຽວ

ມາຮອດປັດຈຸບັນຜາສາດເຮືອນຫີນ ໄດ້ກາຍເປັນແຫຼ່ງທ່ອງທ່ຽວທີ່ມີຊື່ສຽງຂອງແຂວງຊຶ່ງເປັນທີ່ ຮູ້ຈັກຂອງນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະ ເທດ, ສຳລັບ ໄລຍະ ງານບຸນຜາສາດຫີນ ໃນແຕ່ລະປີ ຢູ່ໃນຊ່ວງ ເດືອນ 4 ພັ. ຶຊ່ງໄດ້ມີຈຳນວນນັກທ່ອງທ່ຽວທັງພາຍໃນແລະຕ່າງປະເທດເຂົ້າມາທ່ຽວຊົມ ເປັນຈຳນວນຫຼວງຫຼາຍສະເລ່ຍໃນ ງານບຸນຜາສາດເຮືອນຫີນ ມີນັກທ່ອງທ່ຽວເຂົ້າມາປະມານ 10,000 ກວ່າ ຄົນໃນແຕ່ລະປີ ແລະ ມີຈຳນວນເພີ່ມຂຶ້ນຕາມລຳດັບ ຊຶ່ງສາມາດສ້າງ ລາຍໄດ້ແກ່ປະຊາຊົນທ້ອງຖິ່ນ ເປັນຈຳນວນຫຼວ ງຫຼາຍ. ສັງລວມຈຳນວນນັກທ່ອງທ່ຽວເຂົ້າແຂວງສະຫວັນນະເຂດໃນແຕ່ລະປີ ມີລາຍ ລະອຽດດັ່ງລຸ່ມນີ້:

ຕາຕະລາງທີ 1: ຈຳນວນນັກທ່ອງທ່ຽວທີ່ເຂົ້າມາທ່ຽວແຂວງສະຫວັນນະເຂດປີ 2008-2012

ຊື່ແຂວງສະຫວັນນະເຂດ	2008	2009	2010	2011	2012
ຈຳນວນນັກທ່ອງທ່ຽວ	477,826	791,924	918,683	1,124,905	1,138,434



ຕາຕະລາງທີ 2: ສະຖິຕິນັກທ່ອງທ່ຽວທີ່ເຂົ້າຢ້ຽມຢາມໃນສອງເມືອງ ປີ 2008-2012

ເມືອງ	2008	2009	2010	2011	2012
ມ.ໄກສອນ ພົມວິຫານ	251,606	365,750	693,077	894,073	897,075
ມ.ໄຊພູທອງ	6,539	7,439	10,035	11,463	12,814

ຂໍ້ມູນໄດ້ມາຈາກ: ປຶ້ມສະຖິຕິການທ່ອງທ່ຽວຂອງພະແນກຖວທແຂວງສະຫວັນນະເຂດປີ 2012 ແລະ ຫ້ອງການຖວທເມືອງໄຊພູທອງ

ຕາຕະລາງທີ 3: ສະຖິຕິນັກທ່ອງທ່ຽວທີ່ເຂົ້າຢ້ຽມຢາມແຫ່ງທ່ອງທ່ຽວ ປີ 2008-2012

ລຳດັບ	ຊື່ແຫ່ງທ່ອງທ່ຽວ	2008	2009	2010	2011	2012
1	ນັກທ່ອງທ່ຽວຕ່າງປະເທດ ເຂົ້າທ່ຽວຊົມຜາສາດເຮືອນຫີນ	148	170	320	347	360
2.	ນັກທ່ອງທ່ຽວພາຍໃນ ເຂົ້າທ່ຽວຊົມຜາສາດເຮືອນຫີນ	460	560	678	740	960
3.	ນັກທ່ອງທ່ຽວຕ່າງປະເທດເຂົ້າທ່ຽວຊົມ ພະທາດໂພນ	12,150	13,840	14,287	15,187	17,944
4.	ນັກທ່ອງທ່ຽວພາຍໃນເຂົ້າທ່ຽວຊົມ ພະທາດໂພນ	38,540	39,526	40,526	45,500	48,526

ຂໍ້ມູນໄດ້ມາຈາກ: ປຶ້ມສະຖິຕິການທ່ອງທ່ຽວຂອງພະແນກຖວທ ແຂວງສະຫວັນນະເຂດປີ 2012 ແລະ ຫ້ອງການຖວທ ເມືອງໄຊພູທອງ

ຈາກຈຳນວນຕົວເລກສະຖິຕິນັກທ່ອງທ່ຽວຂ້າງເທິງນີ້ ແມ່ນຈາກຜົນການສຳຫຼວດ , ເກັບກຳຂໍ້ມູນ ແລະ ຈາກການສັ ງເກດຕົວຈິງແລ້ວຈາກການສໍາພາດອໍານາດການປົກຄອງບ້ານ, ເມືອງທີ່ກ່ຽວຂ້ອງເຫັນ ວ່າ: ນັກທ່ອງທ່ຽວທີ່ເຂົ້າມາທ່ຽວຊົມເມືອງໄຊພູທອງ ສາມາດແຍກໄດ້ຄື ນັກທ່ອງທ່ຽວພາຍໃນ ສ່ວນໃຫຍ່ ແມ່ນມາຈາກແຂວງໃກ້ຄຽງທີ່ຕ້ອງການສ້າງບຸນສົດທາ ແລະ ຜູ້ສົນໃຈກ່ຽວກັບ ແຫລ່ງບູຮານສະຖານອັນ ເກົ່າແກ່ ແລະ ຕ້ອງການພັກຜ່ອນ ນອກຈາກນັ້ນກໍຍັງແມ່ນບັນດາທ່ານຜູ້ເຂົ້າຮ່ວມກອງປະຊຸມຂອງແຂວງ, ເມືອງໄດ້ໄປທ່ຽວຊົມແຫ່ງທ່ອງທ່ຽວ.

3.1.6 ການເຊື່ອມໂຍງກັບແຫລ່ງທ່ອງທ່ຽວອື່ນໆ

ແຫຼ່ງທ່ອງທ່ຽວຢູ່ບໍລິເວນຜາສາດເຮືອນຫີນ ຖືວ່າເປັນຈຸດເຊື່ອມຕໍ່ໜຶ່ງທີ່ສຳຄັນ ແລະ ໂດດເດັ່ນໃນ ການດຶງດູດນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດ , ເປັນຈຸດເຊື່ອມຕໍ່ກັບແຫ່ງທ່ອງທ່ຽວອື່ນ ພາຍໃນເມືອງເຊ່ນ: ພະທາດໂພ່ນ, ວັດສອນຕານ, ຖ້ຳພະ ແລະ ດົງນ້ຳຫຸ ເຊື່ອມຕໍ່ກັບປະເທດໄທ ເພື່ອ ດຶງດູດແຂກທັງພາຍໃນ ແລະ ຕ່າງປະເທດ ທີ່ເດີນທາງມາຜ່ານແຂວງສະຫວັນນະເຂດ ໃຊ້ເວລາພັກເຊົາ ຫລື ທ່ອງທ່ຽວຢູ່ບໍລິເວນເມືອງ ໄຊພູທອງ ແລະ ພ້ອມທັງເປັນສ້າງວຽກເຮັດງານທຳໃຫ້ປະຊາຊົນແຂວງ ສະຫວັນນະເຂດຫລາຍຂຶ້ນ ເພື່ອເຮັດໃຫ້ແຫ່ງທ່ອງທ່ຽວຂ້າງເທິງນີ້ມີຄຸນຄ່າ ພວກເຮົາຈະຕ້ອງໄດ້ປັບປຸງ ສະຖານທີ່ດ່ງກ່າວ ເປັນຕົ້ນສິ່ງອຳນວຍຄວາມສະດວກທີ່ຈຳເປັນຈຳນວນໜຶ່ງ, ປະຕິສັງຄອມບັນດາທາດ, ການັຈດຄວາມເປັນລະບຽບ ພາຍໃນແຫ່ງທ່ອງທ່ຽວເປັນ໋ຕ້ນ: ພະທາດໂພ່ນ, ຜາສາດເຮືອນຫີນ ໃຫ້ມີ ຄວາມໂດດເດັ່ນ ຕະຫລອດຮອດການປົກປັກຮັກສາປ່າໄມ້, ສິ່ງແວດລ້ອມ, ຄວາມສະອາດ ພາຍໃນແຫ່ງ ທ່ອງທ່ຽວ ແລະ ສ້າງໃຫ້ມີກິດຈະກຳການທ່ອງທ່ຽວທີ່ຫລາກຫລາຍຮູບແບບ.

ຮູບແຜນທີ່ທີ 4: ແຜນທີ່ເຊື່ອມຕໍ່

3.2 ສະພາບດ້ານການທ່ອງທ່ຽວພາຍນອກ ແລະ ບໍລິເວນໃກ້ຄຽງ

3.2.1 ສະພາບໂຄງສ້າງດ້ານການບໍລິການທ່ອງທ່ຽວ

ເຖິງວ່າຈຳນວນນັກທ່ອງທ່ຽວ ທີ່ມາໃຊ້ບໍລິການຢູ່ເມືອງຍັງບໍ່ຫຼາຍ ແຕ່ສະພາບທີ່ວທັດທຳມະຊາດ ລຽບຕາມແມ່ນ້ຳຂອງ ມີຄວາມສວຍງາມ ແລະມີຄວາມສະຫງົບ ໃນປັດຈຸບັນມີການລົງທຶນສ້າງສິ່ງຮອງ ຮັບດ້ານການບໍລິການ ເຊັ່ນ : ມີເຮືອນັພກຈຳນວນ 2 ແຫ່ງ, ການສ້າງຂີດຄວາມສາມາດດ້ານ ການບໍລິ ການຍັງຈຳກັດ, ຮ້ານອາຫານທີ່ຂຶ້ນທະບຽນເປັນທາງການຍັງບໍ່ທັນມີ, ແຕ່ເປັນແບບຄອບຄົວ, ຕະຫຼາດ ຕົ້ນຕໍຂອງບັນດາເຮືອນພັກ ແມ່ນແຂກຈາກບັນດາພະແນກການອ້ອມຂ້າງແຂວງ, ພະນັກງານລົງພື້ນ ຖານ, ສຳລັບນັກທ່ອງທ່ຽວພາຍນອກທີ່ມາຄ້າງຄືນແມ່ນມີຈຳນວນໜ້ອຍ.

3.2.2 ການຄົມມະນາຄົມຂົນສົ່ງ

ສະພາບເສັ້ນທາງເຂົ້າເຖິງເມືອງໄຊພູທອງ, ໃນໄລຍະທາງ ແຕ່ເທດສະບານເມືອງໄກສອນຫາ ເມືອງໄຊພູທອງ ແມ່ນ 60 ກິໂລແມັດ ແລະ 16 ກິໂລແມັດ ຈາກເທດສະບານເມືອງຫາແຫ່ງທ່ອງທ່ຽວ ຜາສາດເຮືອນຫີນ. ໃນັ້ນສາມາດເ້ຂົ້າ-ອອກໄດ້ສອງເ້ສັ້ນທາງຄື: ເ້ສັ້ນທາງແ່ເທດສະບານເມືອງໄກສອນ ລຽບຕາມເ້ສັ້ນທາງແຄມຂອງ, ສະພາບເ້ສັ້ນທາງເປັນດິນແດງ ແລະ ຈາກເທດສະບານແຂວງລຽບຕາມ

ເສັ້ນທາງທາງເລກທີ 13ໃຕ ເຂົ້າຫາເມືອງໄຊພູທອງ ສະພາບເສັ້ນທາງເປັນປູຢາງ, ມີຄວາມສະດວກດີ, ແຕ່ສຳລັບເສັ້ນທາງພາຍໃນເທດສະບານເມືອງແມ່ນເປັນເສັ້ນທາງຫຼູປຢາງ ເຮັດໃຫ້ການຄົມມະນາຄົມມີຄວາມສະດວກສະບາຍ. ນອກຈາກເສັ້ນທາງບົກແລ້ວກໍຍັງມີເສັ້ນທາງນ້ຳ ເຊັ່ນ: ແມ່ນ້ຳຂອງ ຊຶ່ງມີຊາຍແດນຕິດກັບປະເທດໄທ ຊຶ່ງມີຄວາມສະດວກໃນການຄ້າຂາຍລະຫວ່າງເມືອງຊາຍແດນດ້ວຍກັນ.

3.2.3. ຜະລິດຕະພັນການທ່ອງທ່ຽວທີ່ມີໃນບໍລິເວນພາຍນອກ ແລະ ເຂດໃກ້ຄຽງ

ດັ່ງທີ່ໄດ້ສະເໜີຂ້າງເທິງ ກຸ່ມບ້ານເຮືອນຫີນປະກອບດ້ວຍ 2 ບ້ານໃຫ່ຍ ຄືບ້ານດົງດອກໄມ້, ບ້ານເຮືອນຫີນ. ໂດເສດສະເພາະໃນການັຈດງານສະຫຼອງບຸນຜາສາດຫີນປະຈຳປີ ໃນທຸກໆ ເດືອນ 4 ເພັງ ຈະມີປະຊາຊົນ 4 ບ້ານເຂົ້າຮ່ວມໃນການັຈດງານຄື: ບ້ານເຮືອນຫີນ, ບ້ານດົງດອກໄມ້, ບ້ານດອນສະໂນດ ແລະ ບ້ານເລົາໝາກຮຸດ. ຢູ່ບໍລິເວນນອກຂອງແຫຼ່ງທ່ອງທ່ຽວຜາສາດເຮືອນຫີນ ປະຊາຊົນປະກອບອາຊີບ ດ້ານກະສິກຳ ປູກຝັງ, ລ້ຽງສັດ ໂດຍສະເພາະແມ່ນການປູກເຂົ້າ, ປູກຫ້ວຍ, ອ້ອຍ. ໃນຕົ້ນປີ 2012 ປະຊາຊົນໃນ ບ້ານ ມີລາຍຮັບ ປະມານ 2.000.000 ກີບຕໍ່ຄົນຕໍ່ປີ ສະເລ່ຍຕໍ່ຄົວເຮືອນ ປະມານ 15.000.000 ກີບຕໍ່ປີ ນອກນັ້ນ ກໍມີປະຊາຊົນຈຳນວນໜຶ່ງມີອາຊີບລ້ຽງສັດ, ຫາປາ, ຫຍິບປັກ ທັກແສວ ເພື່ອຜະລິດໃຊ້ສອຍພາຍໃນຄອບຄົວ ແລະ ຍັງບໍ່ມີອົງກອນໃດມາສົ່ງເສີມໃຫ້ຜະລິດເປັນສິນຄ້າ ປະກອບກັບສິນຄ້າຂອງປະເທດເພື່ອນບ້ານໄດ້ເຂົ້າມາຕີຕະຫຼາດດ້ວຍລາຄາທີ່ຖືກກ່ວາຈ່ຶງເຮັດໃຫ້ຫຼຸມເຂົ້ອ ດ່ງກ່າວກຳລັງຈະສູນຫາຍໄປ ຖ້າບໍ່ມີວິທີການຟື້ນຟູທີ່ດີ. ແຫ່ງທ່ອງທ່ຽວຜາສາດເຮືອນຫີນເປັນນ່ຶງ ໃນປະນິຍະສະຖານັອນເ່ົ່າທາງດ້ານປະຫັວດສາດ ແລະ ວັດທະນະທຳ ຂອງແຂວງທີ່ເປັນທ່າແຮງ ັອນສຳຄັນ ແລະ ສາມາດສ້າງລາຍັຮບເຂ້ົາສູ່ຊຸມຊົນທ້ອງຖ່ິນ ແຕ່ຍັງບ່ທັນໄດ້ຮັບການັພດທະນາ ເພື່ອ ສ້າງຄຸນຄ່າ, ສ້າງມ່ີດຈະກຳການທ່ອງທ່ຽວໃ້ຫມ່ີຄວາມຫຼາກຫຼາຍ ເພື່ອຕອບສະໜອງັກບຄວາມຕ້ອງການຂອງັນກ່ທ່ອງ ທ່ຽວັທງພາຍໃນ ແລະ ຕ່າງປະເທດ.

ສຳລັບບ້ານດອນສະໂນດ ຕ້ັງຢ່ກາງນ້ຳຂອງ 12 ກ່ິໂລຕາແ ັມດ, ລວງກ້ວາງ 2 ກ່ິໂລຕາແ ັມດ, ຍາວ 6 ກ່ິໂລຕາແ ັມດ ມ່ີປະຊາກອນັທງໝ ັດ 247 ຄົນ, ຍ ງ 108 ຄົນ, ມ່ 58 ັຫ ງຄາເຮືອນ, 63 ຄອບຄົວ ອາຊ ບ ັຕ້ນຕໍແມ່ນຊາວກະສິກອນ ແລະ ຖ ວ່ ັບ ານ ັດ ງ ່ ກ ວ ັ ເປ ນ ຈ ດ ສ ນ ໃ ຈ ຂ ງ ັ ນ ກ ່ ທ ່ ອ ງ ທ ່ ຽ ວ ໂ ດ ຍ ສ ະ ເ ພ າ ະ ກ ິ ດ ຈ ະ ກ ຳ Homestay, ລ ວ ງ ເ ຮ ື ອ ທ ່ ຽ ວ ຊ ົ ມ ທ ຳ ມ ະ ຊ າ ດ, ຄ ວ າ ມ ຫ ຼ ວ ງ ບ ສ ະ ຫ ງ ບ, ຂ ີ ່ ລ ດ ຖ ບ ນ ອ ກ ຈ າ ກ ັ ນ ບ ານ ີ ້ ຖ ວ ່ າ ເ ປ ນ ບ ານ ໜ ່ ງ ທ ່ ີ ມ ີ ່ ສ ອ ນ ຮ ່ ວ ມ ໂ ດ ຍ ກ ົ ງ ໃ ນ ກ ານ ກ ະ ກ ຽ ມ ງ ານ ບ ຸ ນ ນ ະ ັ ມ ດ ສ ະ ກ ານ ຜ າ ສ າ ດ ເ ຮ ື ອ ນ ຫ ີ ນ. ນ ອ ກ ຈ າ ກ ນ ີ ້ ບ ານ ດ ່ ງ ກ ່ າ ວ ກ ໍ ເ ປ ນ ຈ ດ ດ ຶ ງ ດ ູ ດ ນ ັ ກ ທ ່ ອ ງ ທ ່ ຽ ວ ໄ ທ ທ ່ ີ ່ ອ າ ໄ ສ ຢ ່ ລ ງ ບ ຕ າ ມ ລ ຳ ແ ມ ່ ນ ້ ຳ ຂ ອ ງ ແ ລ ະ ມ ີ ການ ຄ ້ າ ຂ າ ຍ ສ ະ ດ ວ ກ ດ ີ.

3.2.4 ກິດຈະກຳການທ່ອງທ່ຽວ, ການສ້າງເຄືອຄ່າຍຜະລິດຕະພັນ ແລະ ສະໜອງຜະລິດຕະພັນການທ່ອງທ່ຽວເຊື່ອມໂຍງກັບແຫຼ່ງທ່ອງທ່ຽວ

ບໍລິເວນຜາສາດເຮືອນຫີນໃນອານາຄົດຖືວ່າເປັນຈຸດດຶງດູດນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດ ທີ່ສຳຄັນແຫ່ງໜຶ່ງຂອງແຂວງສະຫວັນນະເຂດ. ດັ່ງນັ້ນ ຜະລິດຕະພັນທັງໝົດຂອງປະຊາຊົນ ທີ່ກ່າວມາຂ້າງເທິງຈຳນວນສ່ວນຫຼາຍ ໄດ້ມາຈຳໜ່າຍກັບທີ່ໃຫ້ແກ່ພໍ່ຄ້າພາຍໃນເມືອງ ແລະ ແຂວງ

ຈຳນວນໜ່ວຍ ນອກຈາກນັ້ນກໍສົ່ງໄປຈຳໜ່າຍທີ່ປະເທດໄທ, ການຜະລິດຂອງປະຊາຊົນໃນໄລຍະຜ່ານມາກໍ ປະສົບຂໍ້ຫຍຸ້ງຍາກພໍສົມຄວນ, ປະຊາຊົນພະຍາຍາມຫາກຳນົດລາຍໄດ້ສ່ວນໜ່ວຍຈາກການປູກພືດກະສິກຳ, ລ້ຽງສັດ ຊ່ວຍເປັນລາຍໄດ້ທີ່ດີພໍຄວນ. ດັ່ງນັ້ນ, ການສ້າງກົດຈະກຳດ້ານການທ່ອງທ່ຽວ ຈຶ່ງບໍ່ໄດ້ຮັບຄວາມ ສົນໃຈ, ຄວາມເຂົ້າໃຈຂອງປະຊາຊົນໃນທ້ອງຖິ່ນຕ່າງໆນານາການທ່ອງທ່ຽວຍັງອ່ອນນ້ອຍ, ຊຶ່ງພວກເຮົາ ກໍມີຊັບພະຍາກອນທ່ອງທ່ຽວ ທີ່ເປັນທ່າແຮງຢູ່ແລ້ວ ແຕ່ບໍ່ທັນໄດ້ຮັບການສົ່ງເສີມເທົ່າທີ່ຄວນ ແລະ ພາກສ່ວນທີ່ກ່ຽວຂ້ອງຂອງລັດ ກໍບໍ່ທັນໄດ້ຕັ້ງໜ້າໃນການສຸມໃສ່ພັດທະນາແຫຼ່ງທ່ອງທ່ຽວ ດັ່ງກ່າວ ຢ່າງ ຈິງຈັງ, ສາຍເຫດຍ້ອນພວກເຮົາຂາດປະສົບການ, ບໍ່ມີພະນັກງານວິຊາການທີ່ມີຄວາມສາມາດທາງດ້ານ ວິຊາການລົງເລິກສະເພາະເພື່ອນຳພາການຈັດຕັ້ງປະຕິບັດກົດຈະກຳການທ່ອງທ່ຽວ, ຂາດງົບປະມານໃນ ການສະໜັບສະໜູນ ຈຶ່ງເຮັດໃຫ້ພວກເຮົາເສຍໂອກາດ.

III. ການວິເຄາະຈຸດດີ, ຈຸດອ່ອນ, ໂອກາດ ແລະ ສິ່ງທີ່ທ້າທາຍ SWOT Analysis ຜາສາດເຮືອນຫີນ

1. ຈຸດດີ

- ອຳນາດການປົກຄອງແຂວງສະຫວັນະເຂດ ,ເມືອງໄຊພູທອງ ແລະ ບ້ານ ໄດ້ເຫັນຄວາມສຳຄັນຂອງ ການພັດທະນາແຫຼ່ງທ່ອງທ່ຽວຜາສາດເຮືອນຫີນ, ປະຊາຊົນບ້ານເຮືອນຫີນໄດ້ເອົາໃຈໃສ່ ແລະ ໃຫ້ການ ຮ່ວມມືເປັນຢ່າງດີ. ໃນການຮັກສາສະພາບແວດລ້ອມ ໂດຍສະເພາະແມ່ນການປົກປັກຮັກສາຕົ້ນໄມ້ ແລະ ອານາໄມບໍລິເວນອ້ອມຂ້າງຜາສາດຫີນ ເຮັດໃຫ້ສະຖານທີ່ບູຮານແຫ່ງນີ້ຮົ່ມເຢັນດ້ວຍຕົ້ນໄມ້ໃຫຍ່ຈຳນວນ ຫຼວງຫຼາຍຊຶ່ງໄດ້ກາຍເປັນອົງປະກອບທີ່ສຳຄັນທີ່ເຮັດໃຫ້ຜາສາດຫີນມີຄວາມສວຍງາມ , ມີສະພາບແວດ ລ້ອມທີ່ດີ,ມີອາກາດສົດຊື່ນ ແລະ ກາຍເປັນສະເໜ່ສະເພາະຂອງສະຖານທີ່ແຫ່ງນີ້ ຊຶ່ງຈະກາຍເປັນເປັນ ບ່ອນພັກຜ່ອນແກ່ນັກທ່ອງທ່ຽວໄດ້ໃນອານາຄົດ.
- ອຳນາດການປົກຄອງທ້ອງຖິ່ນ ແລະ ປະຊາຊົນທີ່ຢູ່ອ້ອມຂ້າງຜາສາດເຮືອນຫີນໂດຍສະເພາະ 4 ໝູ່ ບ້ານ ຄື: ບ້ານດົງດອກໄມ້, ບ້ານເຮືອນຫີນ (ບ້ານດົງໝາກມີ້), ບ້ານເຫຼົ້າໝາກຮູດ ແລະ ບ້ານດອນ ສະໂນດ ມີຄວາມເຊື່ອຖື ແລະ ຮັກສາຮີດຄອງປະເພນີດັ້ງເດີມໄດ້ເປັນຢ່າງດີເຮັດໃຫ້ຜາສາດເຮືອນຫີນໄດ້ ຮັບການປົກປັກຮັກສາມາຮອດປະຈຸບັນ.
- ບ້ານດົງດອກໄມ້, ບ້ານເຮືອນຫີນ (ບ້ານດົງໝາກມີ້), ບ້ານເຫຼົ້າໝາກຮູດ ແລະ ບ້ານດອນສະໂນດ ເປັນກຸ່ມບ້ານທີ່ຢູ່ອ້ອມ ຜາສາດເຮືອນຫີນ ມີທ່າແຮງເສດຖະກິດດີພໍສົມຄວນ ຊຶ່ງປະຊາຊົນສ່ວນໃຫ່ຍມີລາຍ ຮັບຕົ້ນຕໍຈາກການຂາຍເຂົ້າ ແລະ ພືດໝີ່ນທາງດ້ານກະສິກຳ ສ່ວນລາຍຮັບອື່ນມາຈາກການລ້ຽງສັດ ແລະ ຄ້າຂາຍ. ສະເລ່ຍລາຍຮັບຂອງປະຊາຊົນແມ່ນ 2.000.000 ກີບ/ຄົນ/ປີ
- ຜາສາດເຮືອນຫີນເປັນແຫຼ່ງທ່ອງທ່ຽວທີ່ມີຮ່ອງຮອຍທາງດ້ານວັດທະນະທຳ ແລະ ປະຫວັດສາດ ທັງ ເປັນສະຖານທີ່ສຶກສາຮຽນຮູ້ໃຫ້ແກ່ນັກສຶກສາ, ເປັນທີ່ດຶງດູດນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດ.

2. ຈຸດອ່ອນ

- ບໍ່ໄດ້ສ້າງແຜນຄຸ້ມຄອງ, ບູລະນະ ທີ່ມີການຮັບຮອງຈາກແຂວງ ຫຼື ຂະແໜງການທີ່ກ່ຽວຂ້ອງຂອງສູນ ກາງທີ່ເປັນລາຍລັກອັກສອນທາງການເພື່ອເປັນບ່ອນອີງໃນການຄຸ້ມຄອງ, ບູລະນະ ແລະ ພັດທະນາ, ແຫຼ່ງທ່ອງທ່ຽວຜາສາດເຮືອນຫີນບໍ່ທັນໄດ້ຈັດຢູ່ໃນບູລິມາສິດການພັດທະນາແຫຼ່ງທ່ອງທ່ຽວຂອງແຂວງ ສະຫວັນນະເຂດ, ແຫຼ່ງທ່ອງທ່ຽວດັ່ງກ່າວຍັງບໍ່ມີການຈັດສັນ, ກຳນົດເຂດ ແລະ ຄຸ້ມຄອງທີ່ເປັນລະບົບ
- ພາຍໃນບໍລິເວນຜາສາດເຮືອນຫີນບໍ່ທັນໄດ້ຮັບການບູລະນະເທົ່າທີ່ຄວນ, ການຄຸ້ມຄອງບໍ່ທັນເປັນ ລະບົບ, ຊິ້ນສ່ວນໂຄງສ້າງຂອງຜາສາດເຮືອນບາງສ່ວນໄດ້ກະແຈກກະຈາຍອອກໄປ.
- ການກຳນົດຂອບເຂດຜ່ານມາຍັງບໍ່ຊັດເຈນເຮັດໃຫ້ເນື້ອທີ່ບາງສ່ວນຖືກບຸກລຸກຈາກປະຊາຊົນທີ່ຢູ່ໃຊ້ເຂດ ດັ່ງກ່າວ ແລະ ມີການປຸກສ້າງທີ່ຢູ່ອາໃສແບບຊະຊາຍ.
- ຂະແໜງການທີ່ກ່ຽວຂ້ອງ ທັງສູນກາງ ແລະ ທ້ອງຖິ່ນບໍ່ທັນມີວິທີການ ຫຼື ມາດຕະການສະເພາະ ເພື່ ບູລະນະ,ປະຕິສັຂອນ ແລະພັດທະນາກິດຈະກຳການທ່ອງທ່ຽວເລີ່ມຈາກ ການ ຈັດກອງປະຊຸມສະເພາະ

ເພື່ອປຶກສາຫາລືການບູລະນະ ແລະ ພັດທະນາສິ່ງອຳນວຍຄວາມສະດວກໃຫ້ແກ່ແຫຼ່ງທ່ອງທ່ຽວດັ່ງກ່າວ, ການຈັດບູລິມາສິດໃນການພັດທະນາ ແລະ ການໂຄສະນາຕ່າງໆແມ່ນບໍ່ທັນໄດ້ປະຕິບັດເທົ່າທີ່ຄວນ.

- ຄວາມຮັບຮູ້ຂອງປະຊາຊົນໃນບໍລິເວນດັ່ງກ່າວຕໍ່ວຽກງານທ່ອງທ່ຽວຍັງຕ່ຳຫຼາຍ ແລະ ພູມປັນຍາທ້ອງຖິ່ນກໍ່ຍັງບໍ່ທັນໄດ້ຮັບການຟື້ນຟູເພື່ອສົ່ງເສີມການທ່ອງທ່ຽວ,ຈຶ່ງເຮັດໃຫ້ແຫຼ່ງທ່ອງທ່ຽວດັ່ງກ່າວບໍ່ໄດ້ຮັບການພັດທະນາເທົ່າທີ່ຄວນ.
- ບໍ່ທັນມີຜະລິດຕະພັນທີ່ຮັບໃຊ້ໃຫ້ແກ່ການທ່ອງທ່ຽວ ໂດຍສະເພາະ ແມ່ນເຄື່ອງລະນຶກທີ່ຈະຂາຍໃຫ້ນັກທ່ອງທ່ຽວ, ຍັງບໍ່ທັນມີການບໍລິການ ແລະ ກິດຈະກຳການທ່ອງທ່ຽວໃນແຫຼ່ງທ່ອງທ່ຽວກໍ່ບໍ່ທັນໄດ້ຮັບການພັດທະນາ.
- ພື້ນຖານໂຄງລ່າງຍັງບໍ່ໄດ້ຮັບການປັບປຸງ ແລະພັດທະນາ ເພື່ອສ້າງສິ່ງອຳນວຍຄວາມສະດວກໃຫ້ແກ່ນັກທ່ອງທ່ຽວ.

3. ໂອກາດ

- ຜາສາດເຮືອນຫີນມີທີ່ຕັ້ງຕິດກັບແມ່ນ້ຳຂອງ ທາງຕິດຕາເວັນຕົກຕິດກັບປະເທດໄທ ແລະ ເຊື່ອມໂຍງກັບແຫຼ່ງທ່ອງທ່ຽວທີ່ສຳຄັນ ໂດຍສະເພາະແມ່ນພະທາດໂພ່ນທີ່ເນສະຖານທີ່ທ່ອງທ່ຽວອັດທະນະທຳທີ່ໄດ້ຮັບຄວາມເຊື່ອຖືຈາກນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດ.
- ແຫຼ່ງທ່ອງທ່ຽວຜາສາດຫີນກຳລັງຈະຖືກຮັບຮອງເປັນມໍລະດົກແຫ່ງຊາດ,ໃນປະຈຸບັນການຮ່ວມມືດ້ານການທ່ອງທ່ຽວໃນປະເທດອານຸພາກພື້ນ ແລະ ອາຊຽນມີການເຊື່ອມໂຍງການທ່ອງທ່ຽວລະຫວ່າງປະເທດຫຼາຍວົງຈອນຊຶ່ງການເຊື່ອມຍົງການທ່ອງທ່ຽວແຫຼ່ງທ່ອງທ່ຽວມໍລະດົກກໍ່ເປັນກິດຈະກຳໜຶ່ງທີ່ປະເທດຕ່າງໆໃຫ້ຄວາມສົນໃຈ,ແຂວງສະຫວັນນະເຂດທີ່ຕັ້ງຕາມເສັ້ນທາງແລວເສດຖະກິດຕາເວັນອອກ - ຕາເວັນຕົກຂອງປະເທດໃນອານຸພາກພື້ນຈຶ່ງເປັນໂອກາດໜຶ່ງໃນການສ້າງວົງຈອນການທ່ອງທ່ຽວຜາສາດເຮືອນຫີນເຊື່ອມໂຍງກັບແຫຼ່ງທ່ອງທ່ຽວຂອງປະເທດເພື່ອນບ້ານ.ຊຶ່ງເປັນໂອກາດໃນການດຶງດູດເປັນທີ່ສົນໃຈຂອງນັກລົງທຶນພາຍໃນ ແລະ ຕ່າງປະເທດ,ອົງການຈັດຕັ້ງສາກົນໃຫ້ຄວາມສົນໃຈໃນການບູລະນະແຫຼ່ງທ່ອງທ່ຽວດັ່ງກ່າວ.
- ປະຊາຊົນໃນກຸ່ມບ້ານທີ່ຢູ່ໃກ້ກັບຄຽງກັບຜາສາດເຮືອນຫີນຈະມີອາຊີບເສີມ ແລະ ສ້າງລາຍຮັບໃຫ້ຄອບຄົວໃນການປະກອບສ່ວນເຂົ້າໃນກິດຈະກຳການທ່ອງທ່ຽວບໍລິເວນຜາສາດເຮືອນຫີນ.

4. ສິ່ງທ້າທາຍ

- ຍ້ອນບໍ່ທັນມີການວາງແຜນໃນການບູລະນະແຫຼ່ງທ່ອງທ່ຽວຜາສາດເຮືອນຫີນ, ທີ່ຜ່ານມາຈຶ່ງມີການພັດທະນາໂດຍບໍ່ທັນໄດ້ມີການຄົ້ນຄ້ວາຮອບຄອບໃນດ້ານວິຊາການຂອງການອະນຸລັກ ຕົວຢ່າງ: ການສ້າງຮົ້ວກຳແພງອ້ອມ, ການເທເບຕົ້ງທາງເຂົ້າຫາຜາສາດຫີນ, ການຖົມໜອງຕໍ່ໜ້າຜາສາດເຮືອນຫີນ ເຮັດໃຫ້ໂຄງລ່າງທີ່ກໍ່ສ້າງຜ່ານມານັ້ນກະທົບຕໍ່ເອກະລັກຜາສາດເຮືອນຫີນ ແລະພວກເຮົາຕ້ອງໄດ້ປັບປຸງບູລະນະຄືນໃຫ້ຢູ່ໃນສະພາບເດີມຊຶ່ງເປັນການສູນເສຍທຶນຮອນຫຼາຍພໍສົມຄວນ.

- ແຫຼ່ງທ່ອງທ່ຽວຜາສາດເຮືອນຫີນມີທີ່ຕັ້ງເຊື່ອມຍົງກັບແຫຼ່ງທ່ອງທ່ຽວທີ່ມີຊື່ສຽງ ແລະ ເປັນທີ່ນິຍົມຂອງ ນັກທ່ອງທ່ຽວເຊັ່ນ : ພະທາດໂພ່ນ,ດົງນ້ຳພຸ,ຖ້ຳພະ, ຖ້າພວກເຮົາບໍ່ມີການພັດທະນາຢ່າງມີຈຸດສຸມ ແລະຕໍ່ ເນື່ອງ ຈະເຮັດໃຫ້ ແຫຼ່ງທ່ອງທ່ຽວຜາສາດເຮືອນຫີນບໍ່ໄດ້ຮັບຄວາມສົນໃຈຈາກນັກທ່ອງທ່ຽວ ແລະ ພວກ ເຂົາຈະຫັນຄວາມສົນໃຈໄປແຫຼ່ງທ່ອງທ່ຽວອື່ນທີ່ມີກິດຈະກຳ ແລະ ສິ່ງອຳນວຍຄວາມສະດວກຫຼາຍກ່ວາ.

IV. ແນວຄວາມຄິດໃນການພັດທະນາແຫຼ່ງທ່ອງທ່ຽວຜາສາດເຮືອນຫີນ

ຜ່ານການສຳຫຼວດແລະເກັບກຳຂໍ້ມູນໃນການພັດທະນາແຫຼ່ງທ່ອງທ່ຽວຜາສາດເຮືອນຫີນໃນປັດຈຸ ບັນເຫັນວ່າໃນໄລຍະທີ່ຜ່ານມາໄດ້ມີການສຳຫຼວດຂອງພາກສ່ວນທີ່ກ່ຽວຂ້ອງເຊັ່ນ:ກົມມໍລະດົກກະຊວງຖວທ , ຂັ້ນແຂວງ ແລະ ເມືອງ ຊຶ່ງ ແຕ່ລະພາກສ່ວນກໍ່ມີແນວຄວາມຄິດເພື່ອປັບປຸງ ແລະ ພັດທະນາ ຜ່ສາດ ເຮືອນຫີນໃຫ້ເປັນແຫຼ່ງທ່ອງທ່ຽວທີ່ສາມາດດຶງດູດນັກທ່ອງທ່ຽວມາຢ້ຽມຢາມ. ໃນປະຈຸບັນແຫຼ່ງທ່ອງທ່ຽ ດັ່ງກ່າວຍັງບໍ່ທັນໄດ້ເປັນທີ່ຮູ້ຈັກຂອງນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະ ເທດ,ການບູລະນະປະຕິສັງ ຂອນກໍ່ບໍ່ທັນໄດ້ຮັບການຈັດຕັ້ງປະຕິບັດ,ປະສາດເຮືອນຫີນໄດ້ຖືກປະປ່ອຍມາເປັນເວລາຫຼາຍປີ ແລະ ມີ ຄວາມຊຸດໂຊມ,ແຕ່ຍ້ອນວ່າປະຊາຊົນໃນບໍລິເວນດັ່ງກ່າວມີຄວາມເຊື່ອຖື ແລະ ມີ ສັດທາຕໍ່ສາດສະໜາຈຶ່ງ ເຮັດໃຫ້ປະສາດຫີນດັ່ງກ່າວໄດ້ຖືກຮັກສາໄວ້ ແລະ ເນື້ອທີ່ດິນໃນບໍລິເວນດັ່ງກ່າວອຳນາດການປົກຄອງກໍ່ ໄດ້ຮັກສາໄວ້ໂດຍບໍ່ໃຫ້ມີການບຸກລຸກ.ການອະນຸລັກຮັກສາທຳມະຊາດກໍ່ມີການຄຸ້ມຄອງໄດ້ເປັນຢ່າງດີເຮັດ ໃຫ້ແຫຼ່ງທ່ອງທ່ຽວດັ່ງກ່າວປົກຄຸມໄປດ້ວຍຕົ້ນໄມ້ສີຂຽວ,ແຕ່ເຖິງຢ່າງໃດພວກເຮົາກໍ່ບໍ່ທັນໄດ້ຕັ້ງບັນຫາ, ມີ ການວາງແຜນລະອຽດມີຈຸດສຸມໃນຈັດບູລິມາສິດການປົກປ້ອງ, ການບູລະນະຮັກສາ ແລະ ການພັດທະນາ ການທ່ອງທ່ຽວຜາສາດເຮືອນຫີນຍັງບໍ່ທັນເປັນຮູບພະທຳ. ຈຶ່ງເຮັດໃຫ້ແຫຼ່ງທ່ອງທ່ຽວດັ່ງກ່າວຖືກປ່ອຍປະ ລະເລີຍໂດຍບໍ່ໄດ້ຮັບການບູລະນະ, ປັບປຸງ ແລະ ພັດທະນາ.

ເພື່ອເຮັດໃຫ້ສະຖານທີ່ປູນິຍະສະຖານແຫ່ງນີ້ ໄດ້ກາຍເປັນແຫຼ່ງທ່ອງທ່ຽວທີ່ມີຊື່ສຽງຂອງຂອງປະ ເທດ, ສາມາດດຶງດູດນັກທ່ອງທ່ຽວເຂົ້າປະເທດກໍ່ຄືແຂວງສະຫວັນນະເຂດຄວນມີທິດທາງສະເພາະໃນການ ພັດທະນາ ແລະ ຄຸ້ມຄອງແຫຼ່ງທ່ອງທ່ຽວ ດັ່ງກ່າວຢ່າງຮີບດ່ວນ ແລະ ເປັນບູລິມາສິດໃນການພັດທະນາ ແຫຼ່ງທ່ອງທ່ຽວຂອງແຂວງ.

1. ການກຳນົດແບ່ງເຂດພາຍໃນແຫຼ່ງທ່ອງທ່ຽວ

ການກຳນົດແບ່ງເຂດ ຫຼື Zoning ແມ່ນເພື່ອກຳນົດໃຫ້ຮູ້ລະອຽດເຂດອະນຸລັກ, ເຂດກັນຊົນ ເຂດສະຫງວນ ແລະ ເຂດບໍລິການ. ໂດຍອີງຕາມການສຳຫຼວດສະພາບ ພື້ນທີ່ຕົວຈິງ ແລະ ຄວາມເໝາະ ສົມ, ທ່າແຮງ ແລະ ການສຶກສາທາງດ້ານວິຊາການ ເພື່ອເປັນພື້ນຖານໃນການປັບປຸງ ແລະພັດທະນາ ແຫຼ່ງທ່ອງທ່ຽວ.

ການກຳນົດແບ່ງເຂດແຫຼ່ງທ່ອງທ່ຽວຜາສາດເຮືອນຫີນໃນບົດລາຍງານສະບັບນີ້ແມ່ນ ອີງຕາມການ ປຶກສາຫາລືລະຫ່ວາງທີມງານຂັ້ນສູນກາງ, ພະແນກຖວທແຂວງສະຫັວນນະເຂດ ແລະ ເມືອງໄຊພູທອງ, ບ້ານເຮືອນຫີນ ຊຶ່ງໄດ້ກຳນົດເອົາຂອບເຂດເນື້ອທີ່ແຫຼ່ງທ່ອງທ່ຽຍຜ ຜາສາດເຮືອນຫີນທັງມົດ ??? ເຮັກຕາ, ລາຍລະອຽດເຂດອະນຸລັກ,ເຂດກັນຊົນ,ເຂດສະຫງວນແລະເຂດບໍລິການມີດັ່ງນີ້ :

- **ເຂດອະນຸລັກ**

ເປັນເຂດທີ່ບໍ່ອະນຸຍາດໃຫ້ມີການປຸກສ້າງສິ່ງອຳນວຍຄວາມສະດວກດ້ານຕ່າງໆ ແຕ່ສາມາດປັບປຸງບູລະນະໄດ້ເຊັ່ນ: ການເຮັດອະນາໄມສິ່ງກີດຂວາງເພື່ອອະນຸລັກເຂດດັ່ງກ່າວໃຫ້ຢູ່ໃນສະພາບເດີມ ແລະ ມີຄວາມສວຍງາມ. **ເຂດອະນຸລັກ**ສຳລັບແຫຼ່ງທ່ອງທ່ຽວຜາສາດເຮືອນຫີນມີເນື້ອທີ່ທັງມົດ 4 ເຮັກຕາ,ທິດເໜືອຕິດກັບບ້ານເຮືອນຫີນ,ທິດຕາເວນອອກຕິກຫບເຂດບໍລິການ,ທິດໃຕ້ຕິດກັບເຂດກັນຊົນ ແລະທິດຕາເວັນ ຕົກຕິດກັບແມ່ນ້ຳຂອງ.

- **ເຂດກັນຊົນ**

ແມ່ນເຂດພື້ນທີ່ອ້ອມຂ້າງ ຫຼື ຕິດພັນກັບແຫຼ່ງທ່ອງທ່ຽວ ຊຶ່ງມີຂອບເຂດເນື້ອທີ່ທີ່ຈຳກັດໂດຍບໍ່ອະນຸຍາດໃຫ້ມີສິ່ງປຸກສ້າງໃດໆທັງໝົດ, ກຳນົດເພື່ອປົກປັກຮັກສາເຂດອະນຸລັກເຂດກັນຊົນໃນແຫຼ່ງທ່ອງທ່ຽວຜາສາດເຮືອນຫີນ ແມ່ນກຳນົດເອົາເຂດດິນລອມຂອງບ້ານ,ມີເນື້ອທີ່ 1 ເຮັກຕາ,ທິດເໜືອຕິດກັບເຂດອະນຸລັກ,ທິດຕາເວັນອອກຕິດກັບທົ່ງນາປະຊາຊົນ,ທິດໃຕ້ຕິດກັບເຂດບ້ານເຮືອນຫີນແລະທິດຕາເວັນຕົກຕິດກັບແມ່ນ້ຳຂອງ

- **ເຂດສະຫງວນ**

ແມ່ນເຂດທີ່ສະຫງວນໄວ້ ສຳລັບການພັດທະນາກິດຈະການໃດໜຶ່ງສະເພາະ, ສາມາດກໍ່ສ້າງສິ່ງອຳນວຍຄວາມສະດວກແຕ່ຕ້ອງໄດ້ກຳນົດ ແລະ ໄດ້ຮັບອະ**ນຸ**ຍາດ.**<u>ຕົວຢ່າງ:</u>** ຈຸດຊົມວິວ, ບ່ອນຕັ້ງແຄ້ມ, ຫ້ອງການພະນັກງານ, ຈຸດແວ່ເຊົ້າຂອງນັກ ທ່ອງທ່ຽວພາຍໃນແຫຼ່ງທ່ອງທ່ຽວ. ສິ່ງກໍ່ສ້າງຕ້ອງມີຄວາມເປັນເອກະລັກສະເພາະ ແລະ ມີຄວາມກົມກືນກັບສະພາບແວດລ້ອມໃນພື້ນທີ່.

ສຳລັບແຫຼ່ງທ່ອງທ່ຽວຜາສາດເຮືອນຫີນ ເຂດສະຫງວນແມ່ນຢູ່ທາງທິດຕາເວັນອອກສ່ຽງໃຕ້ຂອງຜາສາດເຮືອນຫີນ ມີເນື້ອທີ່ 3,2 ha. ເປັນເຂດທີ່ມີຮ່ອງຮອຍການຕັດຫີນເພື່ອໄປສ້າງຜາສາດເຮືອນຫີນ, ທິດເໜືອຕິດກັບເຂດຂອງໂຮງຮຽນບ້ານເຮືອນຫີນ, ທິດຕາເວັນອອກຕິດກັບທົ່ງນາປະຊາຊົນ, ທິດໃຕ້ຕິດກັບເຂດສະຫງວນຂອງປະຊາຊົນ, ທິດຕາເວັນຕົກຕິດກັບທົ່ງນາຂອງປະຊາຊົນ.

- **ເຂດບໍລິການ**

ແມ່ນເຂດທີ່ສາມາດປຸກສ້າງສິ່ງອຳນວຍຄວາມສະດວກຕ່າງໆໄດ້ເຊັ່ນ: ຮ້ານ ອາຫານ, ຮ້ານຂາຍເຄື່ອງທີລະນຶກ, ຫ້ອງຂໍ້ມູນຂ່າວສານ ຫຼື ກະດານຂ່າວ, ບ່ອນຈອດລົດ, ຫ້ອງນ້ຳສາທາລະນະ, ບ່ອນຂາຍປີ້ ແລະ ອື່ນໆ. ແຕ່ຕ້ອງໄດ້ຮັບອະນຸຍາດຈາກພາກສ່ວນກ່ຽວຂ້ອງ ແລະ ມີການຈັດສັນຢ່າງເປັນລະບົບ, ປຸກສ້າງໃຫ້ມີຄວາມເປັນລະບຽບ, ສວຍງາມ ແລະ ມີຄວາມກົມກືນກັບສະພາບຂອງພື້ນທີ່.

ແຫຼ່ງທ່ອງທ່ຽວຜາສາດເຮືອນຫີນແບ່ງອອກເປັນສອງເຂດຄື: ເຂດບໍລິການທີ່1 ແລະ ເຂດຂະຫຍາຍການບໍລິການໃນນີ້ :

ເຂດບໍລິການທີ 1 : ມີເນື້ອທີ່ ສອງເຮັກຕາ,ທິດເໜືອຕິດກັບເສັ້ນທາງເຂົ້າປະສາດເຮືອນຫີນ, ທິດຕາເວັນອອກຕິດກັບເຂດໂຮງຮຽນບ້ານເຮືອນຫີນ,ທິດໃຕ້ຕິດກັບທົ່ງນາປະຊາຊົນ,ທິດຕາເວັນຕົກຕິດກັບເຂດອະນຸລັກ.

ເຂດຂະຫຍາຍການບໍລິການ : ປະຈຸບັນເປັນທົ່ງນາ ແລະ ທີ່ຢູ່ຂອງປະຊາຊົນ. ມີເນື້ອທີ່ 0,5 ເຮັກຕາ ທິດເໜືອຕິດກັບເຂດທີ່ຢູ່ຂອງປະຊາຊົນ, ທິດຕາເວັນອອກຕິດກັບເສັ້ນທາງໄປຫາຕົວເມືອງ, ທິດໃຕ້ຕິດກັບເສັ້ນທາງເຂົ້າໄປຜາສາດເຮືອນຫີນ, ທິດຕາເວັນຕົກຕິດກັບເຮືອນປະຊາຊົນ.

ແຜນທີ່ແຫຼ່ງທ່ອງທ່ຽວ:(ຂອບເຂດແຫຼ່ງທ່ອງທ່ຽວຜາສາດເຮືອນຫີນ)

ຮູບແຜນທີ່ທີ : ແຜນທີ່ຂອບເຂດພັດທະນາແຫຼ່ງທ່ອງທ່ຽວຜາສາດເຮືອນຫີນ

ຮູບແຜນທີ່ທີ : ແຜນທີ່ຈຸດທີ່ຕັ້ງຜາສາດເຮືອນຫີນ

ຮູບແຜນທີ່ທີ :

ຮູບແຜນທີ່ທີ :ແຜນທີ່ຈັດວາງເຂດບໍລິການ

2. ການກຳນົດກິດຈະກຳ

ການບູລະນະປະຕິສັງຂອນ ແລະ ພັດທະນາແຫຼ່ງທ່ອງທ່ຽວຜາສາດເຮືອນຫີນແມ່ນຕ້ອງໄດດຳເນີນໄປຢ່າງມີຄວາມຮັບຜິດຊອບ, ມີການຄົ້ນຄ້ວາອອກແບບລະອຽດ, ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງທາງດ້ານວິຊາການໂຍສະເພາະແມ່ນກົມມໍລະດົກ ຊຶ່ງໂຄງສ້າງໃນການພັດທະນາແຫຼ່ງທ່ອງທ່ຽວ ດັ່ງກ່າວ ນີ້ແມ່ນ:

- ການບູລະນະ, ປະຕິສັງຂອນ ບູຮານນະສະຖານ
- ການພັດທະນາ ແລະ ສ້າງກິດຈະກຳການທ່ອງທ່ຽວຕາມທ່າແຮງຂອງແຫຼ່ງທ່ອງທ່ຽວ ແລະ ທ່າແຮງຂອງທ້ອງຖິ່ນ.

2.1 ການກຳນົດກິດຈະກຳຂອງແຫຼ່ງທ່ອງທ່ຽວ

ຕາມປົກກະຕິການບໍລິການແຫຼ່ງທ່ອງທ່ຽວຈະມີການບໍລິການພາຍໃນ ແລະ ພາຍນອກແຫຼ່ງທ່ອງທ່ຽວແຕ່ເນື່ອງຈາກວ່າປະຊາຊົນສາມບ້ານທີ່ຕິດພັນກັບແຫຼ່ງທ່ອງທ່ຽວຄື: ບ້ານເຮືອນຫີນ(ດົງໝາກມີ້)ແມ່ນມີທີ່ຕັ້ງຢູ່ກັບແຫຼ່ງທ່ອງທ່ຽວ, ບ້ານດົງດອກໄມ້, ບ້ານດອນສະໂນດ ແມ່ນຕັ້ງຢູ່ໃນເຂດບໍລິເວນໃກ້ຄຽງ, ກິດຈະກຳການທ່ອງທ່ຽວທັງໝົດຈຶ່ງຕິດພັນກັບການມີສ່ວນຮ່ວມຂອງປະຊານສາມບ້ານດັ່ງກ່າວ, ເຂົາເຈົ້າທັງເປັນຜູ້ມີສ່ວນຮ່ວມໃນການໃຫ້ຂໍ້ມູນຂ່າວສານ, ເປັນພະນັກງານນຳທ່ຽວ, ທັງເປັນຜູ້ມີສ່ວນຮ່ວມໂດຍກົງໃນການປົກປັກຮັກສາ ແລະ ຄຸ້ມຄອງແຫຼ່ງທ່ອງທ່ຽວດັ່ງກ່າວຊຶ່ງກິດຈະກຳມີ ດັ່ງນີ້: ການນຳທ່ຽວຊົມປູນິຍະສະຖານ ໂດຍການນຳໃຊ້ພາຫະນະຕ່າງໆທີ່ກຳນົດໃນການບໍລິການພາຍແຫຼ່ງທ່ອງທ່ຽວເຊັ່ນ: ລົດບໍລິການນຳທ່ຽວ, ການບໍລິການເຊົ່າລົດຖີບທ່ຽວຊົມແຫຼ່ງທ່ອງທ່ຽວຕາມວົງຈອນເສັ້ນທາງທີ່ກຳນົດໄວ້, ການທັດສະນະສຶກສາຮຽນຮູ້ປະສົບການ, ປະຫັວດສາດຕ່າງໆຈາກແຫຼ່ງຂໍ້ມູນຂ່າວສານຕ່າງໆທີ່ໃຫ້ບໍລິການພາຍບໍລິເວນແຫຼ່ງທ່ອງທ່ຽວ, ການບໍລິການຕ້ອນຮັບ, ການຂາຍສິນຄ້າຈາກຜະລິດຕະພັນກະສິກຳ,ເຄື່ອງທີ່ລະນຶກຈາກເຄື່ອງຈັກສານ,ຫັດຖະກຳການຕັດຫຍິບເຄື່ອງໃຊ້ສອຍ, ການບໍລິການອາຫານເຄື່ອງດື່ມ, ການບໍລິການເຮືອນພັກໂຮມສະເຕ.....

3. ຜູ້ມີສ່ວນຮ່ວມໃນການພັດທະນາ

ພາກສ່ວນທີ່ກ່ຽວຂ້ອງຫຼືຜູ້ທີ່ມີສ່ວນຮ່ວມ	ວຽກງານພັດທະນາແລະສົ່ງເສີມ	ຜົນປະໂຫຍດທີ່ຈະໄດ້ຮັບ

	ການທ່ອງທ່ຽວ	
- ຂະແໜງການທ່ອງທ່ຽວ - ປະຊາຊົນບ້ານ ເຮືອນທີ່ນ, ບ້ານດົງດອກໄມ້, ບ້ານສະໂນດ ແລະ ບ້ານເລົາໝາກຮູດ	ພັດທະນາແລະຄຸ້ມຄອງແຫຼ່ງ ທ່ອງທ່ຽວຜາສາດເຮືອນທີ່ນໃຫ້ ເປັນແຫຼ່ງທ່ອງທ່ຽວແບບຍືນຍົງ -ພັດທະນາແລະສົ່ງເສີມ ການທ່ອງທ່ຽວວັດທະນະທຳ, ປະຫັວດສາດ, ພັດທະນາສິ່ງອຳ ນວຍຄວາມສະດວກ ແລະສ້າງ ກິດຈະກຳການບໍລິການທີ່ຫຼາກ ຫຼາຍ - ມີວຽກເຮັດງານທຳ,ອາຊີບ ເສີມ, ພັດທະນາແລະສົ່ງເສີມ ຜະລິດຕະພັນ ແລະ ບໍລິການ ເພື່ອຂາຍໃຫ້ນັກທ່ອງທ່ຽວເຊັ່ນ: ການນຳທ່ຽວ, ຂ່ລົດບໍລິການ, ການບໍລິການຕ້ອນຮັບອື່ນໆ	- ເຮັດໃຫ້ນັກທ່ອງທ່ຽວທັງພາຍໃນ ແລະຕ່າງ ປະເທດເຂົ້າມາທ່ຽວຊົມຫຼາຍ ຂຶ້ນ - ມີລາຍໄດ້ໃຫ້ທ້ອງຖິ່ນ - ແຫຼ່ງທ່ອງທ່ຽວໄດ້ຮັບການພັດທະນາ ດີຂຶ້ນ, ມີສິ່ງອຳນວຍຄວາມສະດວກ ແລະ ສ້າງສິ່ງດຶງດູດໃຫ້ນັກທ່ອງທ່ຽວ ມາທ່ຽວຊົມເພີ້ມຂຶ້ນ - ສ້າງລາຍຮັບ, ສ້າງວຽກເຮັດງານທຳ ,ອາຊີບເສີມໃຫ້ ສັງຄົມ, ປະຊາຊົນ ມີ ສ່ວນຮ່ວມໃນການພັດທະນາແຫຼ່ງທ່ອງ ທ່ຽວ,ເຮັດໃຫ້ເຂົາເຈ້ົາມີຄວາມຕື່ນຕົວ ໃນການອະນຸລັກຮັກສາຊັບພະຍາກອນ ຫຼາຍຂຶ້ນ, ຊີວິດການ ເປັນຢູ່ຂອງ ປະຊາຊົນດີຂຶ້ນ - ລາຍໄດ້ຈາກການທ່ອງທ່ຽວສາມາດ ສ້າງເປັນກອງທຶນພັດທະນາ ແລະ ສົ່ງເສີມການທ່ອງທ່ຽວຂອງກຸ່ມບ້ານໄດ້
- ແຂວງສະຫວັນນະເຂດ	ອາກອນລາຍໄດ້ຈາກການ ບໍລິການທ່ອງທ່ຽວ	-ໂຄສະນາແຂວງສະຫວັນນະເຂດ ໃຫ້ ນັກທ່ອງທ່ຽວໄດ້ຮູ້ຈັກເພີ້ມຂຶ້ນ,ປະກອບ ສ່ວນໃຫ້ເສດຖະກິດ ຂອງ ແຂວງມີ ການຂະຫຍາຍຕົວ ແລະ ມີກິດຈະກຳ ການທ່ອງທ່ຽວທີ່ຫຼາກຫຼາຍ
ຂະແໜງການ ວັດທະນະທຳ	ຮັບປະກັນວ່າກິດຈະກຳ ການທ່ອງທ່ຽວມີຄວາມ	- ການປົກປັກຮັກສາແລະ ການຄຸ້ມ ຄອງປົກປັກຮັກສາມໍລະດົກທາງ ວັດທະນະທຳ, ປະຫັວດສາດ

ຂະແໜງຊັບພະຍາກອນທຳມະຊາດແລະສິ່ງແວດລ້ອມ	ສອດຄ່ອງກັບນະໂຍບາຍແລະຫຼັກການຄຸ້ມຄອງແຫຼ່ງທ່ອງທ່ຽວວັດທະນະທຳ	- ການຮັກສາແຫຼ່ງປ່າໄມ້ ແລະ ນຳໃຊ້ພື້ນທີ່ຢ່າງມີປະສິດທິຜົນ
ຜູ້ສຳປະທານ(ຖ້າມີໃນອານາຄົດ)	ພັດທະນາທຸລະກິດການບໍລິການທ່ອງທ່ຽວຢ່າງມີຄວາມຮັບຜິດຊອບແລະສົ່ງເສີມການທ່ອງທ່ຽວບົນພື້ນຖານແຜນພັດທະນາລວມຂອງແຫຼ່ງທ່ອງທ່ຽວ	- ສ້າງລາຍຮັບໃຫ້ທຸລະກິດ ແລະ ປະຊາຊົນທ້ອງຖິ່ນເຮັດໃຫ້ພາກທຸລະກິດມີສ່ວນຮ່ວມໃນການພັດທະນາ ແລະຄຸ້ມຄອງແຫຼ່ງທ່ອງທ່ຽວ - ສ້າງທັກສະແລະຄວາມອາດສາມາດໃນການບໍລິການໃຫ້ພາກທຸລະກິດ - ແຫຼ່ງທ່ອງທ່ຽວໄດ້ຮັບການໂຄສະນາເຂົ້າເຖິງກຸ່ມຕະຫຼາດເປົ້າໝາຍ.
ນັກທ່ອງທ່ຽວ	ມານຳໃຊ້ຜະລິດຕະພັນແລະການບໍລິການການທ່ອງທ່ຽວ ແລະມີຄວາມຮັບຜິດຊອບຕໍ່ສິ່ງແວດລ້ອມ, ມີຄວາມເຄົາລົບນັບຖືກົດລະບຽບໃນການຢ້ຽມຢາມແຫຼ່ງທ່ອງທ່ຽວ ດັ່ງກ່າວ.	- ໄດ້ນຳໃຊ້ການບໍລິການ ການທ່ອງທ່ຽວຕອບສະໜອງຕາມຈຸດປະສົງຂອງນັກທ່ອງທ່ຽວ - ໄດ້ຄວາມຮູ້ ແລະ ປະສົບການໃນການທ່ອງທ່ຽວ - ປູກຈິດສຳນຶກໃນການອະນຸລັກຮັກສາສິ່ງແວດລ້ອມ

4. ທິດທາງໃນການພັດທະນາ ແລະ ຄຸ້ມຄອງແຫຼ່ງທ່ອງທ່ຽວຜາສາດເຮືອນຫີນ

4.1 ວິໄສທັດ, ເປົ້າໝາຍ ແລະ ຈຸດປະສົງ

4.1.1 ວິໄສທັດ

ປັບປຸງ, ບູລະນະ, ສະຖານທີ່ປູນີຍະສະຖານຜາສາດຫີນໃຫ້ເປັນແຫຼ່ງທ່ອງທ່ຽວທາງດ້ານວັດທະນະທຳ, ປະຫັວດສາດແຫ່ງຊາດ ໂດຍການຟື້ນຟູເອກະສານທາງປະຫັວດສາດ, ບູລະນະ, ທ້ອນໂຮມວັດຖຸບູຮານເກົ່າແກ່, ພັດທະນາສິ່ງອຳນວຍຄວາມສະດວກໃຫ້ຄົບວົງຈອນ, ເຮັດໃຫ້ແຫຼ່ງທ່ອງທ່ຽວດັ່ງກ່າວມີຄຸນຄ່າສູງເພີ້ມຂຶ້ນ, ຄຸ້ມຄອງອະນຸລັກຮັກສາໂຄງສ້າງ, ຮອງຮອຍປະຫັວດສາດທີ່ຍັງຫຼົງເຫຼືອ ພ້ອມທັງຮັກສາສິ່ງແວດລ້ອມຢ່າງຮັດກຸມ, ໂຄສະນາດຶງດູດນັກທ່ອງທ່ຽວເຂົ້າມາທ່ອງທ່ຽວໃນບໍລິເວນ

ດັ່ງກ່າວໂດຍການນຳໃຊ້ສັນຍາລັກຜາສາດເຮືອນຫີນ ອະລິຍະທຳຍຸກຂອມ.ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງແຂວງ ຊ່ວຍສ້າງລາຍໄດ້ໃຫ້ປະຊາຊົນທ້ອງຖິ່ນ.

4.1.2 ເປົ້າໝາຍ

ແຕ່ນີ້ຮອດປີ 2020 ຕ້ອງສຳເລັດແຜນບູລະນະ, ປັບປຸງ ແລະ ພັດທະນາແຫຼ່ງທ່ອງທ່ຽວປະຫັວດສາດຜາສາດເຮືອນຫີນ ໃຫ້ກາຍເປັນແຫຼ່ງທ່ອງທ່ຽວອະລິຍະທຳ ຂອງສປປລາວໃນຍຸກຂອມ ໃຫ້ມີການບໍລິການໃນຮູບແບບການທ່ອງທ່ຽວອະນຸລັກປະຊາຊົນມີສ່ວນຮ່ວມເພື່ອຄວາມຍືນຍົງ ແລະ ໂຄສະນາດຶງດູດນັກທ່ອງທ່ຽວໃຫ້ມາຢ້ຽມຢາມນັບມື້ນັບຫຼາຍປະກອບສ່ວນເຂົ້າໃນການສ້າງເສດຖະກິດໃຫ້ທ້ອງຖິ່ນໃຫ້ມີລາຍຮັບຈາກການບໍລິການທ່ອງທ່ຽວໃນເຂດດັ່ງກ່າວ.

4.1.3 ຈຸດປະສົງ

- ເພື່ອຈັດສັນກຳນົດເຂດແຫຼ່ງທ່ອງທ່ຽວຜາສາດເຮືອນຫີນໃຫ້ລະອຽດໂດຍມີການຮັບຮອງຈາກອຳນາດການປົກຄອງທ້ອງຖິ່ນ ແລະ ສູນກາງ.
- ເພື່ອບູລະນະ, ປະຕິສັງຂອນ ວັດຖຸບູຮານ ໃຫ້ມີສະພາບທີ່ສົມບູນແບບ,ຮັກສາຮ່ອງ ຮອຍທາງປະຫັວດສາດ, ສະຖາປະຕິຍະກຳ ວັດທະນະທຳ ຂອງຍຸກສະໄໝບົນພື້ນຖານການຮ່ວມມືດ້ານວິຊາການຂອງບັນດາຂະແໜງການທີ່ກ່ຽວຂ້ອງ.
- ເພື່ອພັດທະນາສິ່ງອຳນວຍຄວາມສະດວກ ແລະ ສ້າງກິດຈະກຳການທ່ອງທ່ຽວໃນບໍລິເວນແຫຼ່ງທ່ອງທ່ຽວໃຫ້ມີຄວາມຫຼາກຫຼາຍ, ສ້າງມູນຄ່າເພີ້ມໃຫ້ແກ່ແຫຼ່ງທ່ອງທ່ຽວດັ່ງກ່າວໂດຍການນຳໃຊ້ທ່າແຮງຂອງປະຊາຊົນໃນທ້ອງຖິ່ນ ແລະ ບົນພື້ນຖານການມີສ່ວນຮ່ວມຂອງທຸກພາກສ່ວນ.
- ເພື່ອຄຸ້ມຄອງອະນຸລັກຮັກສາມໍລະດົກແຫ່ງຊາດ, ແຫລ່ງທ່ອງທ່ຽວປະຫວດສາດ, ວັດທະນະທຳ ແລະ ການຮັກສາສະພາບແວດລ້ອມໃຫ້ມີຄວາມຍືນຍົງ.
- ເພື່ອໂຄສະນາດຶງດູດນັກທ່ອງທ່ຽວໃຫ້ເຂົ້າມາທ່ອງທ່ຽວໃນແຫຼ່ງທ່ອງທ່ຽວດັ່ງກ່າວໃຫ້ນັບມື້ນັບຫຼາຍ, ໃຊ້ເວລາພັກເຊົາໃຫ້ຍາວນານໂດຍມີການເຊື່ອມຍົງກັບກິດຈະກຳທາງວັດທະນະທຳຂອງວັດພະທາດໂພ່ນທີ່ເປັນວັດໜຶ່ງທີ່ປະຊາຊົນໃຫ້ຄວາມເຊື່ອຖື,ມີຊື່ສຽງຂອງເມືອງໄຊພູທອງ ແຂວງສະຫວັນນະເຂດ ແລະມີນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດມາທ່ຽວຊົມເປັນຈຳນວນຫຼວງຫຼາຍໃນແຕ່ລະເດືອນ.

4.2 ແຜນງານ ແລະໂຄງການພັດທະນາແຫຼ່ງທ່ອງທ່ຽວຜາສາດເຮືອນຫີນ ເມືອງໄຊພູທອງ ແຂວງສະຫວັນນະເຂດ.

ແຜນງານທີ 1: ການບູລະນະຟື້ນຟູ ແຫຼ່ງທ່ອງທ່ຽວປະຫັວດສາດ, ວັດທະນະທຳ ຜາສາດເຮືອນຫີນ

ໂຄງການ ທີ 1: ສ້າງແຜນບູລະນະ, ປັບປຸງ ແລະ ພັດທະນາ ແຫຼ່ງທ່ອງທ່ຽວປະຫັວດສາດ, ວັດທະນະທຳຜາສາດເຮືອນຫີນ

ປະສານກັບພາກສ່ວນວັດທະນະທຳ ລົງສຳຫຼວດ,ເກັບກຳຂໍ້ມູນ,ສ້າງແຜນບູລະນະ ,ປັບປຸງແລະພັດທະນາກິດຈະກຳການທ່ອງທ່ຽວເພື່ອເປັນເອກະສານບ່ອນອີງໃຫ້ແກ່ການຈັດຕັ້ງປະຕິບັດ.

ໂຄງການ ທີ 2 : ຈັດສັນແຫຼ່ງທ່ອງທ່ຽວຜາສາດເຮືອນຫີນ.

ປະສານກັບພາກສ່ວນອັດທະນະທຳ,ກຳນົດຈັດສັນ,ແບ່ງເຂດກັນຊົມ,ອະນຸລັກ, ສະຫງວນ, ເຂດ ບໍລິການໃນບໍລິເວນແຫຼ່ງທ່ອງທ່ຽວປະຫັວດສາດ, ວັດທະນະທຳ ແລະ ເພື່ອໃຫ້ການຄຸ້ມຄອງພື້ນທີ່ຢ່າງ ຮັດກຸມ ຄວນມີການປັກຫຼັກໝາຍໄປພ້ອມ ບົນພື້ນຖານເນື້ອທີ່ທີ່ມີການຮັບຮອງຈາກອຳນາດການປົກຄອງ.

ໂຄງການ ທີ 3: ອອກແບບບູລະນະ, ປະຕິສັງຂອນ ແລະ ພັດທະນາແຫຼ່ງທ່ອງທ່ຽວ ຜາສາດເຮືອນຫີນ

ຂໍ້ແນະນຳ: ການອອກແບບບູລະນະ, ປັບປຸງ ແລະ ພັດທະນາ ແຫຼ່ງທ່ອງທ່ຽວປະຫັວດສາດ, ວັດທະນະ ທຳ ຜາສາດເຮືອນຫີນ ຕ້ອງມີຄວາມລະມັດລະວັງ,ລະອຽດອ່ອນ ແລະ ແບບຕ້ອງກົມກືນ,ຖືກຕ້ອງຕາມສະ ຖາປະຕິຍະກຳໃນຍຸກດັ່ງກ່າວ.

- ພາຍຫຼັງການສຳຫຼວດ,ຈັດສັນແລ້ວ , ຄວນຈັດຕັ້ງປະຕິບັດການປັກຫຼັກໝາຍ,ເອກະສານການ ກຳນົດຂອບເຂດຂອງແຫຼ່ງທ່ອງທ່ຽວຕ້ອງເຊັນຮັບຮອງຈາກການ ນຳຂອງກະຊວງ ຖ ວ ທ ຫຼື ອຳນາດ ການປົກຄອງແຂວງແລ້ວແຕ່ຄວາມເໝາະສົມ. ເມື່ອມີການຮັບຮອງແລ້ວຕ້ອງປະຕິບັດຕາມແຜນທີ່ກຳນົດ ໄວ້ທຸກປະການ.

ໃນປະຈຸບັນແຜນພັດທະນາແຫຼ່ງທ່ອງທ່ຽວດັ່ງກ່າວບໍ່ທັນມີ, ແຕ່ຄວນສ້າງເອກະສານກົດລະບຽບສະ ເພາະ ເພື່ອເປັນບ່ອນອີງໃຫ້ມີການຄຸ້ມຄອງວັດຖຸບຸຮານດັ່ງກ່າວຢ່າງເຂັ້ມງວດ ແລະ ການຮັກສາສະພາບ ແວດລ້ອມທາງທຳມະຊາດບໍລິເວນດັ່ງກ່າວ, ກ່ອນທີ່ຈະປ່ອຍປະໃຫ້ຊຸດໂຊມໄປກ່ອນນີ້.

ທິດທາງການປະຕິບັດ ເລີ້ມຈາກການສ້າງແຜນບູລະນະ, ບັນທຶກເຫດການທາງປະຫັວດສາດ, ສ້າງ ແຜນທີ່, ສ້າງບັນຊີຊັບສົມບັດວັດຖຸຕ່າງໆທີ່ມີທັງໝົດ, ສຶກສາເບິ່ງວັດຖຸບູຮານຕ່າງໆ ເຊັ່ນ: ອາຍຸການພ້ອມ ທັງສ້າງສາງເກັບມ້ຽນ, ສຶກສາເຖິງຄວາມສຳຄັນ ຂອງ ສະຖານທີ່ດັ່ງກ່າວເພື່ອເປັນຂໍ້ມູນເຜີຍແຜ່, ຂຸງນບົດ ຄົ້ນຄວ້າວິໄຈ, ການຂຸດຄົ້ນຊັຍພະຍາກອນທັງໃນພື້ນດິນ ແລະ ໜ້າດິນ, ສ້າງເອກະສານໂຄສະນາທາງ ວິທະຍຸ, ໂທລະພາບ, ການກຳຈັດຂີ້ເຫຍື້ອໃນສະຖານທີ່ດັ່ງກ່າວ. ຕ້ອງມີການຈັດກອງປະຊຸມພົບປະກັບຜູ້ມີ ສ່ວນຮ່ວມ ເພື່ອຜັນຂະຫຍາຍວິໄສທັດ, ກອງປະຊຸມກ່ຽວກັບການສ້າງລາຍຮັບ, ການບຳລຸງຮັກສາ ແລະ ການບູລະນະປົກປັກຮັກສາ.

ແຜນງານທີ 2: ປັບປຸງ, ບູລະນະ,ປະຕິສັງຂອນ ແລະ ຄຸ້ມຄອງ ວັດຖຸບູຮານ.

- **ໂຄງການ ທີ 1 :** ປັບປຸງ, ບູລະນະປະຕິສັງຂອນຜາສາດເຮືອນຫີນ ແລະ ຮ່ອງຮອຍອື່ນໆ ໃຫ້ ຮັກສາສະພາບເດີມ

- ສົມທົບກັບກົມມໍລະດົກ ຈັດສັນຄືນໃໝ່ສິ່ງກໍ່ສ້າງພາຍໃນບໍລິເວນເຂດອະນຸລັກ
- ບູລະນະຜາສາດເຮືອນຫີນຄືນໃໝ່ (ກົມມໍລະດົກ)
- ບູລະນະທາງເຂົ້າ ໃຫ້ເປັນເສັ້ນທາງສະດວກແຕ່ເປັນຮູບແບບສະຖາປະນິກແບບເກົ່າບໍ່ຄອນເທເບຕົ້ງໃນ ບໍລິເວນຜາສາດເຮືອນຫີນ,
- ໜອງທີ່ເປັນອົງປະກອບສຳຄັນທັງເປັນສັນຍາລັກວັດທະນະທຳໃນຍຸກຂອມ ທີ່ຕັ້ງຢູ່ດ້ານໜ້າປູນິຍະສະ ຖານ, ໄດ້ຖືກຖົມໄປແລ້ວນັ້ນຄວນຄົ້ນຄ້ວາພິຈາລະນາເຮັດຄືນໃໝ່(ສະຖານທີ່ເກົ່າ,ຂະໜາດເກົ່າ) ເພື່ອໃຫ້ ໂຄງປະກອບຂອງສະຖານທີ່ດັ່ງກ່າວເປັນເໝືອນເດີມ.

- ສຳລັບ ກຳແພງທີ່ເມືອງໄດ້ສ້າງຂຶ້ນນັ້ນແມ່ນເຫັນດີໃຫ້ມ້າງອອກຕາມບົດລາຍງານການລົງສຳຫຼວດຂອງ ກົມມໍລະດົກໃນລະຫ່ວ່າງວັນທີ 29/05 -1 0/06 /2011 ແລະ ຖ້າຈະມີການກໍ່ສ້າງຂຶ້ນໃໝ່ ສະຖາປານິກ ກໍ່ຕ້ອງເປັນແບບວັດທະນະທຳສະໄໝຂອມດັ່ງທີ່ເຫັນໃນແບບ.
- ຂຶ້ນບັນຊີວັດຖຸບູຮານທັງໝົດຢ່າງລະອຽດເພື່ອມີການຄຸ້ມຄອງທີ່ຫັດກຸມ ແລະ ເກັບມ້ຽນຮັກສາໃຫ້ດີ ສາມາດສື່ສານໃຫ້ຜູ້ມາທ່ຽວຊົມເຫັນວ່າເປັນວັດຖຸບູຮານໄດ້ມີການອະນຸລັກເປັນຢ່າງດີ.
- **ຂໍ້ແນະນຳ:** ການບູລະນະ, ປັບປຸງ ແລະ ພັດທະນາ ແຫຼ່ງທ່ອງທ່ຽວປະຫັວດສາດ, ວັດທະນະ ທຳຜາສາດເຮືອນຫີນ ຕ້ອງນຳໃຊ້ວິຊາການວິຊາສະເພາະ ແລະ ຄົ້ນ ຄ້ວາຮູບແບບສະຖາ ປະນິກ ໃນຍຸກ ຂອມເພື່ອບູລະນະແຫຼ່ງທ່ອງທ່ຽວດັ່ງກ່າວ. ດັ່ງນັ້ນ,ພາກສ່ວນກ່ຽວຂ້ອງຕ້ອງໄດ້ເຮັດໂດຍກົງ, ໃນວຽກງານ ດັ່ງກ່າວເຫັນສົມຄວນໃຫ້ພາກສ່ວນກ່ຽວຂ້ອງຂອງລັດລົງມືເຮັດໂດຍກົງ ໂດຍການຊອກຫາແຫຼ່ງທຶນຈາກ ລັດຖະບານ,ພາກທຸລະກິດ, ອົງການຈັດຕັ້ງສາກົນ, ໃນດ້ານວິຊາການຄວນພິຈາລະນາໃຫ້ຊ່ຽວຊານທີ່ມີ ຄວາມຊຳນານ ແລະ ປະສົບການຂອງອົງ ການມໍລະດົກໂລກມາໃຫ້ແນວຄວາມຄິດ, ແນະນຳດ້ານວິຊາ ການຄວນມີການກວດກາລະອຽດໃນການຈັດຕັ້ງປະຕິບັດການບູລະນະໃນແຕ່ລະໄລຍະເພື່ອລີກລ້ຽງຂໍ້ຜິດ ພາດ.

ແຜນງານທີ 3 : ພັດທະນາໂຄງລ່າງພື້ນຖານ ແລະ ສິ່ງອຳນວຍຄວາມສະດວກ.
- ໂຄງການ ທີ 1 : ໂຄງການສ້າງຮົ້ວອ້ອມຜາສາດເຮືອນຫີນ
- ໂຄງການ ທີ 2 : ໂຄງການສ້າງຕາຝັ່ງກັ້ນເຈື່ອນ
- **ໂຄງການ ທີ 3 :** ສິ່ງອຳນວຍຄວາມສະດວກເຂດບໍລິການ
- ປະກອບມີ ບ່ອນຈອດລົດ, ບ່ອນເກັບຄ່າບໍລິການ, ຫ້ອງຂໍ້ມູນຂ່າວສານ, ກະດານແຜນທີ່ແຫຼ່ງທ່ອງ ທ່ຽວ,ຫ້ອງນ້ຳສາທາລະນະ ,ປ້າຍຊີ້ບອກຈຸດບໍລິການຕ່າງໆພາຍໃນແຫຼ່ງທ່ອງທ່ຽວ
- ແຜ່ນຫີນແກະສະລັກ ອະທິບາຍປະຫັວດຂອງແຕ່ລະຈຸດ
- ສ້າງຈຸດວາງທູບທຽນ ແລະ ຫໍໄຫ້ວພະເຈົ້າ ໃນແຕ່ລະຈຸດ,ສ້າງຈຸດຖ່າຍຮູບ
- ສ້າງສາລາພັກເຊົາສຳລັບນັກທ່ອງທ່ຽວ
- ສ້າງປ້າຍຊີ້ບອກແຕ່ລະຈຸດ, ປ້າຍຊີ້ບອກສະຖານທີ່ບໍລິການຕ່າງໆຄົບຊຸດໃນແຫຼ່ງທ່ອງທ່ຽວ
- ສ້າງຕະຫຼາດຊຸມຊົນ

ໂຄງການ ທີ 5 : ໂຄງການສ້າງປະຕູໂຂງເຂົ້າແຫຼ່ງທ່ອງທ່ຽວ

- ສ້າງປະຕູໂຂງທາງເຂົ້າແຫຼ່ງທ່ອງທ່ຽວ ທີ່ເປັນສັນຍາລັກຂອງຜາສາດເຮືອນຫີນ 4 ຈຸດ

ໂຄງການ ທີ 6 : ໂຄງການປັບປຸງ ແລະ ພັດທະນາເສັ້ນທາງ

- ພັດທະນາເສັ້ນທາງເຂົ້າເຖິງແຫຼ່ງທ່ອງທ່ຽວຊຶ່ງແຂວງໄດ້ມີແຜນແລ້ວ
- ປັບປຸງ ແລະ ພັດທະນາເສັ້ນທາງເຊື່ອມຕໍ່ໃນແຕ່ລະຈຸດພາຍໃນແຫຼ່ງທ່ອງທ່ຽວໃຫ້ມີຄວາມ ສະດວກ.(ເສັ້ນທາງຍ່າງ,ທາງລົດຖີບ).

ໂຄງການທີ 5 : ປູກຕົ້ນໄມ້

- ຕົບແຕ່ງສວນພຶກສາສາດ ໃນແຕ່ລະຈຸດໃຫ້ເຊື່ອມຍົງກັນດ້ວຍການຟື້ນຟູ ແລະ ປູກຕົ້ນໄມ້ ທີ່ເປັນສັນຍາລັກ (ຕົ້ນຈຳປາ,ຕົ້ນຄູນ,ຕົ້ນດອກຝາງແດງ,ດອກຈານ). ສົມທົບກັບພາກ ສ່ວນກະສິກຳເມືອງເພື່ອຊອກຕົ້ນດອກໄມ້ມາປູກໃຫ້ໃສ່ບໍລິເວນຜາສາດເຮືອນຫີນໃຫ້ມີຄວາມສວຍງາມໂດຍສະເພາະແມ່ນໃນໄລຍະເດືອນມີນາ ຊຶ່ງເປັນເວລາທີ່ມີການຈັດງານບຸນຜາສາດເຮືອນຫີນ ເພື່ອປັບປຸງໃຫ້ເປັນສວນສາທາລະນະແບບທຳມະຊາດ, ເປັນຈຸດພັກຜ່ອນຂອງນັກທ່ອງທ່ຽວ.

ແຜນງານທີ 4 : ແຜນງານການພັດທະນາ ແລະ ສ້າງຄວາມເຂັ້ມແຂງໃຫ້ບຸກຄະລາກອນ

ໂຄງການທີ 1 : ຈັດກອງປະຊຸມສຳມະນາຄວາມສຳຄັນຂອງການທ່ອງທ່ຽວໃຫ້ຜູ້ກຳນົດນະໂຍບາຍຂັ້ນເມືອງ

ໂຄງການທີ 2 : ຝຶກອົບຮົມຈິດສຳນຶກດ້ານການທ່ອງທ່ຽວໃຫ້ປະຊາຊົນ ບັນດາບ້ານທີ່ຕິດພັນກັບແຫຼ່ງທ່ອງທ່ຽວ

ໂຄງການທີ 3 : ຝຶກອົບຮົມການບໍລິການທ່ອງທ່ຽວ , ການຕ້ອນຮັບ ແລະ ການປຸງແຕ່ງ.

ໂຄງການທີ 4 : ຝຶກອົບຮົມການຜະລິດເຄື່ອງຫັດຖະກຳ,ຂອງທີ່ລະນຶກ

ແຜນງານທີ 5 : ການສ້າງກິດຈະກຳໃນແຫຼ່ງທ່ອງທ່ຽວ

- **ໂຄງການ1 :** ສ້າງກິດຈະກຳການທ່ອງທ່ຽວປະຊາຊົນມີສ່ວນຮ່ວມ ແລະ ການສ້າງເຄືອຄ່າຍ ສະໜອງ ແລະ ຜະລິດຕະພັນການທ່ອງທ່ຽວ.

ອີງໃສ່ທ່າແຮງຂອງທ້ອງຖິ່ນ ແລະ ບໍລິເວນແຫຼ່ງທ່ອງທ່ຽວກ້ວາງມີຫຼາຍຈຸດຄວນສົ່ງເສີມໃຫ້ປະຊາຊົນສ້າງຜະລິດຕະພັນການທ່ອງທ່ຽວເຊັ່ນ : ຈັກສານ,ຕ່ຳໜູກ,ຍ້ອມສີທຳມະຊາດ,ຜະລິດເຄື່ອງຫັດຖະກຳ,ການຕັດຫຍິບ.ເພື່ອເຮັດໃຫ້ການຜະລິດດັ່ງກ່າວຕໍ່ເນື່ອງແລະມີຄວາມຍືນຍົງເຫັນສົມຄວນສ້າງຕັ້ງກຸ່ມບໍລິການດັ່ງນີ້:

- ກຸ່ມບໍລິການຕ້ອນຮັບ, ຂາຍບັດເຂົ້າຊົມ (ຈະມີໜ່ວຍງານເຮັດທູບທຽນດອກໄມ້ຂາຍໃຫ້ນັກທ່ອງທ່ຽວທີ່ຕ້ອງການ ສັກກະລະບູຊາ).
- ກຸ່ມບໍລິການຂົນສົ່ງພາຍໃນແຫຼ່ງທ່ອງທ່ຽວ (ບໍລິການລົດນຳທ່ຽວ, ເຊົ່າລົດຖີບ) ເພື່ອໃຫ້ນັກທ່ອງທ່ຽວເຂົ້າຊົມແຫຼ່ງທ່ອງທ່ຽວສະດວກ,ເພື່ອໃຫ້ໄດ້ບັນຍາກາດຂອງສະໄໝປະຖົມບູຮານຊຶ່ງຕ້ອງໄດ້ຄົ້ນຄ້ວາກິດຈະກຳດັ່ງກ່າວໃຫ້ມີຫຼາຍກິດຈະກຳເທົ່າທີ່ຈະເຮັດໄດ້. ທຸກການບໍລິການແມ່ນມີອັດຕາ ຄ່າບໍລິການສະເພາະ.
- ຟື້ນຟູການຕ່ຳໜູກທຳໄໝ, ຈັກສານເພື່ອໃຫ້ປະຊາຊົນມີອາຊີບເສີມ ແລະ ສ້າງເປັນເຄື່ອງທີ່ລະນຶກໃຫ້ນັກທ່ອງທ່ຽວ, ນອກນັ້ນກໍມີ ການແປຮູບຜະລິດຕະພັນກະສິກຳຈາກພືດຕ່າງໆໃຫ້ເປັນອາຫານສຳເລັດຮູບຂາຍໃຫ້ນັກທ່ອງທ່ຽວ.
- ໂຄງການທີ 2 : ການພັດທະນາໂຄງການທ່ອງທ່ຽວເຊື່ອມຕໍ່ກັບແຫຼ່ງທ່ອງທ່ຽວອື່ນໆ
- ສ້າງລາຍການທ່ອງທ່ຽວເຊື່ອມຕໍ່ ລະ ຫ່ວາງປະສາດຫີນ ກັບພະທາດໂພ່ນ,ວັດສອນຕານ,ຖ້ຳພະ ແລະ ດົງນ້ຳພຸໃຫ້ມີຫຼາຍກິດຈະກຳ

ແຜນງານທີ 5 : ການໂຄສະນາແຫຼ່ງທ່ອງທ່ຽວ

- **ໂຄງການທີ 1:** ສ້າງແຜນທີ່ແຫຼ່ງທ່ອງທ່ຽວປະຫັວດສາດ-ວັດທະນະທຳ ຜາສາດຫີນ
- **ໂຄງການທີ 2 :** ໂຄສະນາປະຊາສຳພັນ

- ຂະແໜງການທ່ອງທ່ຽວແຂວງສະຫວັນນະເຂດ ສົມທົບກັບອຳນາດການປົກຄອງແຂວງ ຜະລິດສິ່ງພິມ ໂຄສະນາ, ໂຄສະນາຕາມສື່ຕ່າງໆ ຄື: ວິທະຍຸ, ໜັງສືພິມ, ວາລະສານ, ໂທລະພາບ. ເອົາຂໍ້ມູນລົງໃນເວັບໄຊ ການທ່ອງທ່ຽວຂອງແຂວງ, ສູນກາງແລະເວັບໄຊໂຄສະນາການ ທ່ອງທ່ຽວ ອື່ນໆ ເພື່ອໃຫ້ນັກ ທ່ອງທ່ຽວໄດ້ຮັບຮູ້ ແຫຼ່ງທ່ອງທ່ຽວດັ່ງກ່າວນັບມື້ເພີ້ມຂຶ້ນ.
- ສ້າງເອກະສານໂຄສະນາເປັນພາສາລາວ, ພາສາໄທ ແລະ ພາສາຕ່າງປະເທດ, ໃຫ້ເອົາໃຈໃສ່ທັງຕະຫຼາດພາຍໃນ ແລະ ຕ່າງປະເທດ.
- ສ້າງເອກະສານສິ່ງທີ່ຄວນເຮັດບໍ່ຄວນເຮັດໃນເວລາເຂົ້າມາທ່ອງທ່ຽວໃນແຫຼ່ງທ່ອງທ່ຽວ
- ສົມທົບກັບພາກທຸລະກິດທັງພາຍໃນ ແລະ ຕ່າງປະ ເທດ ຈັດ ຂະບວນຄາລະວານປະຊາສຳພັນແຫຼ່ງທ່ອງທ່ຽວຜາສາດເຮືອນຫີນ ແລະ ແຫຼ່ງທ່ອງທ່ຽວອື່ນໆທີ່ຕິດພັນໂດຍສະເພາະພະທາດໂພ່ນຊຶ່ງເປັນແຫຼ່ງທ່ອງທ່ຽວທີ່ໄດ້ຮັບຄວາມນິຍົມຈາກນັກທ່ອງທ່ຽວພາຍໃນ ແລະ ນັກ ທ່ອງທ່ຽວປະເທດໃກ້ຄຽງເພື່ອໂຄສະນາ.

4.3 ໂຄງສ້າງຄະນະຮັບຜິດຊອບຄຸ້ມຄອງແຫຼ່ງທ່ອງທ່ຽວ

4.3.1 ຄະນະກຳມະການຄຸ້ມຄອງແຫຼ່ງທ່ອງທ່ຽວ

ແຫຼ່ງທ່ອງທ່ຽວຜາສາດຫີນເປັນຊັບພະຍາກອນການທ່ອງທ່ຽວທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງແຂວງ ພ້ອມກັນນັ້ນແຫຼ່ງທ່ອງທ່ຽວດັ່ງກ່າວກະຊວງ ຖວທກຳລັງນຳສະເໜີໃຫ້ລັດຖະບານຮັບຮອງເປັນມໍລະດົກແຫ່ງຊາດ, ຖ້າມີການຄຸ້ມຄອງພັດທະນາກໍຈະເຮັດໃຫ້ແຂວງສະຫວັນນະເຂດມີສະຖານທີ່ທ່ອງທ່ຽວ ທີ່ພັດທະນາ ແລະ ມີຊື່ສຽງດົງດັງຕື່ມອີກແຫ່ງໜຶ່ງ, ສາມາດດຶງດູດນັກທ່ອງທ່ຽວພາຍໃນ ແລະ ນັກທ່ອງທ່ຽວຕ່າງ ປະເທດມາທ່ຽວຊົມ . ເພື່ອເຮັດໃຫ້ແຫຼ່ງທ່ອງທ່ຽວດັ່ງກ່າວໄດ້ມີການພັດທະນາ ແລະ ຄຸ້ມຄອງຢ່າງເປັນລະບົບມີສ່ວນຮ່ວມລະຫວ່າງພາກລັດ-ເອກະຊົນ ແລະ ປະຊາຊົນທ້ອງຖິ່ນຕ້ອງມີການແຕ່ງຕັ້ງຄະນະກຳ ມະການຄຸ້ມຄອງແຫຼ່ງທ່ອງທ່ຽວຊຶ່ງປະກອບມີພາກສ່ວນຕ່າງໆ ດັ່ງນີ້:

- ທ່ານຮອງເຈົ້າແຂວງ ແຂວງສະຫວັນນະເຂດ ຜູ້ຊີ້ນຳ ວຽກງານ ວັດທະນະທຳ - ສັງຄົມ ເປັນຫົວໜ້າ.
- ເຈົ້າເມືອງ/ຮອງເຈົ້າເມືອງໄຊພູທອງຜູ້ຊີ້ນຳວຽກງານຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນຮອງ
- ຫົວໜ້າ/ຮອງຫົວໜ້າພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງສະຫວັນນະເຂດ ຜູ້ຮັບຜິດຊອບວຽກງານທ່ອງທ່ຽວ ເປັນຮອງ
- ຫົວໜ້າຫ້ອງການຖະແຫຼງຂ່າວວັດທະນະທຳ ແລະ ທ່ອງທ່ຽວເມືອງໄຊພູທອງ ເປັນຄະນະ
- ຄະນະພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງໄຊພູທອງ ເປັນຄະນະ
- ຄະນະພະແນກໂຍທາທິການ ແລະ ຂົນສົ່ງເມືອງ ໄຊພູທອງ ເປັນຄະນະ
- ຫ້ອງການຊົນລະປະທານເມືອງ ໄຊພູທອງ ເປັນຄະນະ
- ຫົວໜ້າ/ຮອງຫ້ອງການແຜນການ ແລະ ການລົງທຶນເມືອງ ເປັນຄະນະ

- ຫົວໜ້າ/ຮອງຫ້ອງວ່າການເມືອງ ເປັນຄະນະ
- ນາຍບ້ານ(ຄະນະບ້ານເຮືອນຫີນ) ເປັນຄະນະ

ຂໍ້ແນະນຳ : ນຳສະເໜີແຂວງອອກຂໍ້ຕົກລົງ, ກຳນົດພາລະບົດບາດຂອງຄະນະກຳມະການຊອກຫາແຫຼ່ງທຶນເພື່ອຈັດຫັດສະນະສຶກສາໃຫ້ຄະນະກຳມະການໄດ້ໄປຫັດສະນະສຶກສາຖອດຖອນບົດຮຽນການຄຸ້ມຄອງສະຖານທີ່ທ່ອງທ່ຽວມໍລະດົກໂລກວັດພູຈຳປາສັກ,ຄະນະກຳມະການຄຸ້ມຄອງປະສານສົມທົບກັບພາກທຸລະກິດສ້າງແຜນຈັດກິດຈະກຳການທ່ອງທຽວໃນບໍລິເວນແຫຼ່ງທ່ອງທ່ຽວ.

- ສົມທົບກັບພາກທຸລະກິດໃນການວາງແຜນການໂຄສະນາແຫຼ່ງທ່ອງທຽວມໍລະດົກ, ພ້ອມທັງຊຸກຍູ້ໃຫ້ພາກທຸລະກິດຊ່ວຍໂຄສະນາດຶງດູດນັກທ່ອງທ່ຽວ.

4.3.2 ການສ້າງຕັ້ງກຸ່ມບໍລິການ

ສ້າງຕັ້ງກຸ່ມບໍລິການ ເຊັ່ນ: ກຸ່ມບໍລິການພາຫະນະການນຳທ່ຽວພາຍໃນແຫຼ່ງທ່ອງທ່ຽວ (ລົດບໍລິການ, ລົດຖີບ, ...), ກຸ່ມບໍລິການເຮືອນພັກແຮມນຳປະຊາຊົນ (ໂຮມສະເຕ), ກຸ່ມ ພະນັກງານ ນຳທ່ຽວຂັ້ນບ້ານ, ກຸ່ມບໍລິການ ດອກໄມ້ທູບທຽນເພື່ອບູຊາສິ່ງສັກສິດ, ກຸ່ມນວດແຜນ ບູຮານ ການ ພັດທະນາກິດຈະກຳ ດັ່ງກ່າວເພື່ອເປັນການສ້າງລາຍຮັບເພີ່ມໃຫ້ແກ່ປະຊາຊົນ ແຕ່ຕ້ອງມີການ ນຳພາ, ມີການຈັດຕັ້ງ ແລະ ບໍລິຫານ ໃຫ້ເປັນ ລະບົບໂດຍມີທີມງານຂະແໜງທ່ອງທ່ຽວ ແຂວງສະຫວັນນະເຂດ (ເມືອງໄຊພູທອງ ແລະ ແຂວງ) ເພື່ອຊ່ວຍດ້ານວິຊາການ ແລະ ປົກປ້ອງດ້ານ ຜົນປະໂຫຍດ ໃຫ້ປະຊາຊົນໃນທ້ອງຖິ່ນ.

4.4 ກົນໄກການສ້າງກອງທຶນພັດທະນາແຫລ່ງທ່ອງທ່ຽວເຮືອນຫີນເມືອງໄຊພູທອງ

ໃນອະນາຄົດຕໍ່ໜ້າລາຍໄດ້ຂອງແຫຼ່ງທ່ອງທ່ຽວ ເຮືອນຫີນ ໄດ້ຈາກການ ບໍລິ ການບັນດາ ກິດຈະກຳທີ່ມີໃນແຫລ່ງທ່ອງທ່ຽວ ເຊັ່ນ: ສະຖານທີ່ຈອດລົດ,ປີ້ເຂົ້າຊົມ, ການບໍລິການຂີ່ລົດບໍລິການ, ລົດຖີບ, ການບໍລິການເຊົ່າຮ້ານຂາຍເຄື່ອງທີ່ລະນຶກ,ຮ້ານອາຫານເຄື່ອງດື່ມ, ຄ່າບໍລິການຫ້ອງນ້ຳ, ການ ຂາຍດອກໄມ້ທູບທຽນເພື່ອບູຊາສິ່ງສັກສິດ.

ຂໍ້ແນະນຳ: ແຫຼ່ງທ່ອງທ່ຽວເຮືອນຫີນເປັນສະຖານທີ່ກ້ວາງຂວາງ,ການບູລະນະຮັກສາ, ຄຸ້ມຄອງແຫຼ່ງທ່ອງທ່ຽວ ແລະ ການ ນຳໃຊ້ກິດຈະກຳບາງອັນຕ້ອງໄດ້ນຳໃຊ້ງົບປະມານຫຼາຍສົມຄວນ ດັ່ງນັ້ນ ການສ້າງກອງທຶນເພື່ອພັດທະນາຄຸ້ມຄອງແຫຼ່ງທ່ອງທ່ຽວດັ່ງກ່າວຈຶ່ງມີຄວາມຈຳເປັນ, ລາຍໄດ້ຈາກການ ບໍລິການຕ່າງໆຄວນກຳນົດການແບ່ງປັນໃຫ້ພາກສ່ວນຕ່າງໆ ດັ່ງນີ້: ຜູ້ສຳປະທານກິດຈະກຳບໍລິການຂົນ ສົ່ງ, ອາກອນລາຍໄດ້ໃຫ້ເມືອງ, ການບູລະນະຮັກສາສະພາບແວດລ້ອມ ແລະ ສິ່ງອຳນວຍຄວາມສະດວກ , ການນຳໃຊ້ແຮງງານຜູ້ບໍລິການຕ້ອງແມ່ນປະຊາຊົນໃນທ້ອງຖິ່ນ. ນອກຈາກລາຍໄດ້ຂ້າງເທິງແລ້ວຄະນະ ກຳມະການຄຸ້ມຄອງແຫຼ່ງທ່ອງທ່ຽວປະສານສົມທົບກັບພາກທຸລະກິດສ້າງບຸນຜາສາດເຮືອນຫີນ ຫຼື ງານບຸນ ຕ່າງໆທີ່ກ່ຽວກັບປະຫັວດສາດຄວາມເປັນມາຂອງສະຖານທີ່ແຫ່ງນີ້ເພື່ອເປັນການລະດົມທຶນມາປະຕິສັງ ຂອນແຫຼ່ງທ່ອງທ່ຽວທັງເປັນການດຶງດູດນັກທ່ອງທ່ຽວ.

ດັ່ງນັ້ນ, ຈຶ່ງສ້າງບົດລາຍງານສະບັບນີ້ໄວ້ເປັນບ່ອນອີງໃນການກຳນົດເຂດຈັດສັນແຫຼ່ງທ່ອງທ່ຽວ ແລະ ການພັດທະນາແຫຼ່ງທ່ອງທ່ຽວປະຫັວດສາດ, ວັດທະນະທຳ ຜາສາດເຮືອນຫີນ ເມືອງໄຊພູທອງ, ແຂວງສະຫັວນນະເຂດ.

ຫົວໜ້າພະແນກຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງສະຫັວນນະເຂດ	ຮອງຫົວໜ້າກົມພັດທະນາການທ່ອງທ່ຽວ ຄະນະຮັບຜິດຊອບຈັດສັນແຫຼ່ງທ່ອງທ່ຽວທ່ຽວທ່ຽວ

ລາຍຊື່ຜູ້ເຂົ້າຮ່ວມກອນສຳຫລວດ-ຈັດສັນແຫລ່ງທ່ອງທ່ຽວຜາສາດເຮືອນຫີນ, ເມືອງໄຊພູທອງ, ແຂວງສະຫວັນນະເຂດ ວັນທີ 14-17/02/2013

ທີມງານກົມພັດທະນາການທ່ອງທ່ຽວ				
ລ/ດ	ຊື່ ແລະ ນາມສະກຸນ	ຕຳແໜ່ງ	ບ່ອນສັງເກດ	ເບີໂທ
1	ທ່ານ ນ. ແພງຈັນ ແພງເມືອງ	ຮອງຫົວໜ້າກົມພັດທະນາການທ່ອງທ່ຽວ	ກະຊວງ ຖ ອ ທ	55611497
2	ທ່ານ ໂອເງິນ ປັນຍານຸວົງ	ຫົວໜ້າພະແພກສຳຫລວດ ແລະ ອອກແບບ	ກະຊວງ ຖ ອ ທ	55610533
3	ທ່ານ ສົມໄຊ ສີປະເສີດ	ຮອງຫົວໜ້າພະແນກແຜນການ ແລະ ການພັດທະນາ	ກະຊວງ ຖ ອ ທ	55807138
4	ທ່ານ ສອນໄຊ ຈັນທະວົງ	ຮອງຫົວໜ້າພະແພກສຳຫລວດ ແລະ ອອກແບບ	ກະຊວງ ຖ ອ ທ	22404208
5	ທ່ານ ນ. ພອນມະນີ ສຸຂະທຳມະວົງ	ຫົວໜ້າໜ່ວຍງານອອກແບບຜະລິດຕະພັນທ່ອງທ່ຽວ	ກະຊວງ ຖ ອ ທ	23669662
6	ທ່ານ ສຸວັນນິກອນ ຜາຕັນ	ພະນັກງານວິຊາການ	ກະຊວງ ຖ ອ ທ	22225674
7	ທ່ານ ນິວະໄຊ ມາລາທິບ	ພະນັກງານວິຊາການ	ກະຊວງ ຖ ອ ທ	77715328
ທີມງານຈາກພາກສ່ວນແຂວງສະຫວັນນະເຂດ				
8	ທ່ານ ສີທາ ພັນນະວົງ	ຮອງຫົວໜ້າພະແນກຖວທແຂວງ	ພະແນກຖວທ	55541 979
9	ທ່ານ ບຸນເລີດ ມາດມະນີວົງ	ວິຊາການ	ຫ້ອງການໂຍທາ	2231 5040
10	ທ່ານ ພັນທະມິດ ວົງສຸທີ	ວິຊາການ	ຫ້ອງການ ຖວທ	9666 1428
11	ທ່ານ ຕິກ ບຸດສະດີ	ຮອງຫົວໜ້າ	ຫ້ອງການສຶກສາເມືອງ	2279 2221
12	ທ່ານ ນິຄົມ ພົມມາລາ	ວິຊາການ	ຫ້ອງວ່າການ	9966 6678
13	ທ່ານ ແກ່ນສີ ຊົນນະວົງ	ຮອງຫົວໜ້າ	ສຶກສາເມືອງ	5537 4107
14	ທ່ານ ໜູບຸງ ເທບບົວເຮືອງ	ເລຂາໜ່ວຍພັກ	ບ້ານເຮືອນຫີນ	9923 6818
15	ທ່ານ ໄຊຍະແສງ ສຸລິຍະວົງ	ຮອງຫົວໜ້າຫ້ອງການ	ກະສິກຳ-ປ່າໄມ້ເມືອງ	5523 6517
16	ທ່ານ ອ່ອນຕາ ຈັນທະວົງ	ວິຊາການ	ວັດທະນະທຳແຂວງ	5506 4720
17	ທ່ານ ອຸດອນ ບຸດຕະວົງ	ຮອງຫົວໜ້າ	ຫ້ອງການ ຖວທ	9666 1426
18	ທ່ານ ແຫວນທອງ ວົງແສງສີ	ຮອງຫົວໜ້າ	ຫ້ງການ ຖວທ	2251 8522

19	ທ່ານ ສົມຫວັງ ໄຊຍະຄູນສີ	ນາຍບ້ານ	ເຮືອນຫີນ	9683 0615
20	ທ່ານ ນາງ ພອນສຸກ ເພັດກົງຈັກ	ຮອງຫົວໜ່ວຍງານພັດທະນາ	ທ່ອງທ່ຽວແຂວງ	9894 9722